**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 559 /ລບ

ນະຄອນຫຼວງວຽງຈັນ, ວັນທີ 09 / 09 / 25

# ດຳລັດ
# ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ໜັງສືສະເໜີຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0086/ອຄ, ລົງວັນທີ 20 ມັງກອນ 2025.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ ແລະ ຕິດຕາມ ກວດກາ ການດຳເນີນທຸລະກິດນ້ຳມັນເຊື້ອໄຟ ເພື່ອເຮັດໃຫ້ການດຳເນີນທຸລະກິດດັ່ງກ່າວ ສອດຄ່ອງກັບກົດໝາຍ ແນໃສ່ຮັບປະກັນການສະໜອງນ້ຳມັນເຊື້ອໄຟໃຫ້ພຽງພໍ ແລະ ດັດສົມທຸລະກິດນ້ຳມັນເຊື້ອໄຟໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ທຸລະກິດນ້ຳມັນເຊື້ອໄຟ

ທຸລະກິດນ້ຳມັນເຊື້ອໄຟ ແມ່ນການດຳເນີນທຸລະກິດ ກ່ຽວກັບ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ (ທີ່ບໍ່ແມ່ນໂຮງງານນ້ຳມັນເຊື້ອໄຟຊີວະພາບ), ການນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ, ການຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ, ປ້ຳນ້ຳມັນເຊື້ອໄຟ, ການໃຫ້ບໍລິການສາງ ແລະ ຂົນສົ່ງນ້ຳມັນເຊື້ອໄຟ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ນ້ຳມັນເຊື້ອໄຟ** ໝາຍເຖິງ ຜະລິດຕະພັນນ້ຳມັນ ປະເພດ ນ້ຳມັນແອັດຊັງ, ນ້ຳມັນກາຊວນ, ນ້ຳມັນກາດເຮືອບິນ, ນ້ຳມັນກາດໄຕ້, ນ້ຳມັນເຕົາ, ນ້ຳມັນເຊື້ອໄຟຊີວະພາບ ແລະ ນ້ຳມັນເຊື້ອໄຟ ອື່ນ ຊຶ່ງເປັນສິນຄ້າຍຸດທະສາດ. ນ້ຳມັນເຊື້ອໄຟແຕ່ລະປະເພດ ແຍກອອກເປັນຊະນິດ ຕາມທີ່ກຳນົດໃນມາດຕະຖານແຫ່ງຊາດ ໃນແຕ່ລະໄລຍະ;

2. **ບໍລິສັດ/ໂຄງການ** ໝາຍເຖິງ ລູກຄ້າຂອງບໍລິສັດນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ແລະ ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ທີ່ຊື້ນ້ຳມັນເຊື້ອໄຟ ຕາມລາຄາທີ່ຂະແໜງການອຸດສາຫະກຳ ແລະ ການຄ້າ ກຳນົດໃນແຕ່ລະໄລຍະ ເພື່ອນຳໃຊ້ສະເພາະພາຍໃນໂຄງການ ຫຼື ບໍລິສັດຂອງຕົນ;

3. **ປ້ຳທີ່ບໍລິສັດລົງທຶນເອງ** ໝາຍເຖິງ ປ້ຳນ້ຳມັນເຊື້ອໄຟ ທີ່ບໍລິສັດນຳເຂົ້າ-ສົ່ງອອກ, ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ຫຼື ບໍລິສັດໃຫ້ບໍລິການປ້ຳນ້ຳມັນເຊື້ອໄຟ ເປັນຜູ້ລົງທຶນກໍ່ສ້າງ, ດຳເນີນການຂາຍຍ່ອຍດ້ວຍຕົນເອງ;

4. **ປ້ຳຕົວແທນ** ໝາຍເຖິງ ປ້ຳນ້ຳມັນເຊື້ອໄຟ ຂາຍຍ່ອຍນ້ຳມັນເຊື້ອໄຟ ທີ່ບຸກຄົນ ຫຼື ບໍລິສັດໃຫ້ບໍລິການປ້ຳ ເປັນຜູ້ລົງທຶນກໍ່ສ້າງ ແລະ ດຳເນີນການຂາຍຍ່ອຍດ້ວຍຕົນເອງ ໂດຍເປັນຕົວແທນຈຳໜ່າຍໃຫ້ບໍລິສັດ ນຳເຂົ້າ-ສົ່ງອອກ ຫຼື ຈຳໜ່າຍ ນ້ຳມັນເຊື້ອໄຟພາຍໃນ ໃດໜຶ່ງ;

5. **ບໍລິສັດໃຫ້ບໍລິການປ້ຳນ້ຳມັນເຊື້ອໄຟ** ໝາຍເຖິງ ບໍລິສັດທີ່ດຳເນີນທຸລະກິດ ກ່ຽວກັບ ປ້ຳນ້ຳມັນເຊື້ອໄຟ ຊຶ່ງເປັນປ້ຳທີ່ບໍລິສັດລົງທຶນເອງນັບແຕ່ສອງປ້ຳຂຶ້ນໄປ ໂດຍນຳໃຊ້ເຄື່ອງໝາຍການຄ້າຂອງ ບໍລິສັດນຳເຂົ້າ-ສົ່ງອອກ ຫຼື ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ໃດໜຶ່ງ ທີ່ຕົນເປັນຕົວແທນ;

6. **ສາງນ້ຳມັນເຊື້ອໄຟ** ໝາຍເຖິງ ໂຄງລ່າງພື້ນຖານທາງດ້ານເຕັກນິກ ສຳລັບເກັບຮັກສານ້ຳມັນເຊື້ອໄຟ ຕັ້ງຢູ່ເທິງໜ້າດິນ ຫຼື ໃຕ້ດິນ ໃນຮູບແບບຖັງບັນຈຸ, ມີລະບົບຮັບ-ຈ່າຍ, ປ້ອງກັນຄວາມປອດໄພ ແລະ ປົກປັກຮັກສາສິ່ງແວດລ້ອມ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ;

7. **ໃບຢັ້ງຢືນການນຳໃຊ້ສາງ** ໝາຍເຖິງ ເອກະສານຢັ້ງຢືນ ທີ່ອອກໂດຍ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນທີ່ສາງຕັ້ງຢູ່ ບົນພື້ນຖານການຢັ້ງຢືນ ຄວາມຖືກຕ້ອງດ້ານການກໍ່ສ້າງ, ດ້ານສິ່ງແວດລ້ອມ-ສັງຄົມ ແລະ ດ້ານການສະກັດກັ້ນ-ປ້ອງກັນອັກຄີໄພ ຂອງສາງນ້ຳມັນເຊື້ອໄຟ ຈາກຂະແໜງການກ່ຽວຂ້ອງ;

8. **ເຄື່ອງໝາຍການຄ້າ** ໝາຍເຖິງ ສັນຍາລັກໃດໜຶ່ງ ທີ່ໄດ້ຈົດທະບຽນເຄື່ອງໝາຍການຄ້າ ຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 4 ຫຼັກການກ່ຽວກັບການດຳເນີນທຸລະກິດນ້ຳມັນເຊື້ອໄຟ**

ການດຳເນີນທຸລະກິດນ້ຳມັນເຊື້ອໄຟ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ ແລະ ກົດໝາຍ;
2. ຄຸ້ມຄອງ ແລະ ດັດສົມ ທຸລະກິດນ້ຳມັນເຊື້ອໄຟ ແລະ ດັດສົມລາຄາ ຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ ໃຫ້ເໝາະສົມກັບການພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ;
3. ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟ ແລະ ຜູ້ຊົມໃຊ້;
4. ຮັບປະກັນ ຄວາມໂປ່ງໃສ, ຄວາມຍຸຕິທຳ, ວ່ອງໄວ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ພົວພັນ ແລະ ເຄື່ອນໄຫວ ກ່ຽວກັບການດຳເນີນທຸລະກິດນ້ຳມັນເຊື້ອໄຟ.

ດຳລັດສະບັບນີ້ ບໍ່ນຳໃຊ້ສຳລັບທຸລະກິດໂຮງກັ່ນ ນ້ຳມັນເຊື້ອໄຟ ທີ່ນຳໃຊ້ນ້ຳມັນດິບເປັນວັດຖຸດິບເພື່ອຜະລິດ.

## ພາກທີ II
## ການດຳເນີນທຸລະກິດນ້ຳມັນເຊື້ອໄຟ

### ໝວດທີ 1
### ການຂໍອະນຸຍາດດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ

**ມາດຕາ 6 ທຸລະກິດໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ**

ທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ແມ່ນໂຮງງານ ທີ່ນຳໃຊ້ນ້ຳມັນເຄິ່ງສຳເລັດຮູບເປັນວັດຖຸດິບ ເພື່ອປຸງແຕ່ງ ໃຫ້ເປັນຜະລິດຕະພັນນ້ຳມັນເຊື້ອໄຟສຳເລັດຮູບ.

**ມາດຕາ 7 ການສ້າງຕັ້ງ ແລະ ດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ**

ຜູ້ທີ່ມີຈຸດປະສົງສ້າງຕັ້ງທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ພາຍຫຼັງໄດ້ໃບທະບຽນວິສາຫະກິດແລ້ວ ໃຫ້ ຂໍອະນຸຍາດ ສ້າງຕັ້ງໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ແລະ ດຳເນີນທຸລະກິດ ຕາມທີ່ກຳນົດໄວ້ໃນກົດໝາຍວ່າ ດ້ວຍອຸດສາຫະກຳປຸງແຕ່ງ.

**ມາດຕາ 8 ເງື່ອນໄຂການ ສ້າງຕັ້ງ ແລະ ດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ**

ເງື່ອນໄຂການ ສ້າງຕັ້ງ ແລະ ດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ໃຫ້ປະຕິບັດຕາມກົດ ໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ພ້ອມທັງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ ໃນຮູບແບບບໍລິສັດ;
2. ມີທຶນຈົດທະບຽນ ໜຶ່ງຮ້ອຍຫ້າສິບຕື້ກີບ ຂຶ້ນໄປ;
3. ມີແຫຼ່ງສະໜອງວັດຖຸດິບ ແລະ ຕະຫຼາດຈຳໜ່າຍ ທີ່ແນ່ນອນ;
4. ມີການຕິດຕັ້ງ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ.

**ມາດຕາ 9 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ;
2. ສຳເນົາໃບທະບຽນວິສາຫະກິດ;
3. ໃບຢັ້ງຢືນການຕິດຕັ້ງ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ;
4. ສັນຍາ ຊື້ ຂາຍ ວັດຖຸດິບ;
5. ສັນຍາ ຊື້ ຂາຍ ກັບ ບໍລິສັດນຳເຂົ້າ-ສົ່ງອອກ ຫຼື ບໍລິສັດຈຳໜ່າຍພາຍໃນ.

**ມາດຕາ 10 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ພາຍຫຼັງໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງແລ້ວ ກະຊວງອຸດສາຫະກຳ ແລະ ການ ຄ້າ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ລົງກວດກາຕົວຈິງແລ້ວ ຖ້າຫາກການສ້າງຕັ້ງໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ໄດ້ປະຕິບັດຖືກຕ້ອງ ແລະ ຄົບຖ້ວນ ຕາມເງື່ອນໄຂ ໃຫ້ພິຈາລະນາອອກໃບອະນຸຍາດ ພາຍໃນ

ເວລາ ສິບວັນ ລັດຖະການ. ໃນກໍລະນີບໍ່ສາມາດອອກໃບອະນຸຍາດໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນເວລາດັ່ງກ່າວ.

**ມາດຕາ 11 ອາຍຸ ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ຫຼື ໃບຢັ້ງຢືນດຳເນີນກິດຈະການໂຮງງານ ມີອາຍຸການນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

ຜູ້ດຳເນີນທຸລະກິດໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ທີ່ມີຈຸດປະສົງຂໍຕໍ່ອາຍຸໃບອະນຸຍາດ ຕ້ອງຍື່ນຄຳຮ້ອງຕໍ່ ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ ສາມສິບວັນ ກ່ອນວັນໝົດອາຍຸການນຳໃຊ້ ໂດຍໃຫ້ປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຕໍ່ໃບອະນຸຍາດ ຕາມແບບພິມ;
2. ບົດລາຍງານການດຳເນີນທຸລະກິດ;
3. ສຳເນົາໃບທະບຽນວິສາຫະກິດ;
4. ສຳເນົາໃບອະນຸຍາດດຳເນີນທຸລະກິດ ໂຮງງານປຸງແຕ່ງນ້ຳມັນເຊື້ອໄຟ ຫຼື ໃບຢັ້ງຢືນດຳເນີນກິດຈະການໂຮງງານ;
5. ໃບຢັ້ງຢືນການມອບພັນທະອາກອນ ໜຶ່ງປີ ຜ່ານມາ;
6. ໃບຢັ້ງຢືນການເປັນສະມາຊິກຂອງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດລາວ.

## ໝວດທີ 2
## ການຂໍອະນຸຍາດດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ

**ມາດຕາ 12 ທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ**

ທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ແມ່ນການນຳເຂົ້ານ້ຳມັນເຊື້ອໄຟ ຫຼື ຊື້ຈາກ ໂຮງງານປຸງແຕ່ງນ້ຳມັນເຊື້ອໄຟ ພາຍໃນ ເພື່ອຈຳໜ່າຍໃຫ້ແກ່ວິສາຫະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ, ປ້ຳນ້ຳມັນເຊື້ອໄຟທີ່ບໍລິສັດລົງທຶນເອງ, ປ້ຳຕົວແທນ ແລະ ບໍລິສັດ/ໂຄງການ ຫຼື ນຳເຂົ້ານ້ຳມັນເຊື້ອໄຟ ເພື່ອສົ່ງອອກຕໍ່.

**ມາດຕາ 13 ການຂໍອະນຸຍາດດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ໃຫ້ຂໍອະນຸຍາດດຳເນີນທຸລະກິດນຳ ກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 14 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດ**

ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ມີ ດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ ໃນຮູບແບບບໍລິສັດ;
2. ທຶນຈົດທະບຽນວິສາຫະກິດ ສາມຮ້ອຍຕື້ກີບ ຂຶ້ນໄປ;
3. ສາງນ້ຳມັນເຊື້ອໄຟ ທີ່ສາມາດບັນຈຸນ້ຳມັນເຊື້ອໄຟ ແຕ່ ສິບລ້ານ ລິດຂຶ້ນໄປ ຕາມມາດຕະຖານການປຸກສ້າງ ທີ່ໄດ້ຮັບອະນຸຍາດຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ, ໃນນັ້ນ ຕ້ອງມີສາງນ້ຳມັນເຊື້ອໄຟເປັນຂອງຕົນເອງ ຢ່າງໜ້ອຍ ເຈັດສິບສ່ວນຮ້ອຍ (70%), ສ່ວນທີ່ເຫຼືອສາມາດເຊົ່າໄດ້ ໂດຍມີສັນຍາເຊົ່າຢ່າງໜ້ອຍ ສາມ ປີ;
4. ເຄື່ອງໝາຍການຄ້າ ເປັນຂອງຕົນ;

5. ຕິດຕັ້ງ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ.

**ມາດຕາ 15 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ມີ ດັ່ງນີ້:

1. ຄຳຮ້ອງຂໍ ຕາມແບບພິມ;
2. ສຳເນົາໃບທະບຽນວິສາຫະກິດ;
3. ເອກະສານຢັ້ງຢືນການຖືບັນຊີ;
4. ເອກະສານຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າຂອງບໍລິສັດ;
5. ສັນຍາເຊົ່າສາງນ້ຳມັນເຊື້ອໄຟ ຖ້າມີ;
6. ໃບຢັ້ງຢືນການນຳໃຊ້ສາງນ້ຳມັນເຊື້ອໄຟ ອອກໃຫ້ໂດຍ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນທີ່ສາງນ້ຳມັນເຊື້ອໄຟຕັ້ງຢູ່;
7. ໃບຢັ້ງຢືນການຕິດຕັ້ງ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ;
8. ບົດລາຍງານການປະເມີນມູນຄ່າຊັບສິນທຶນຄົງທີ່ ຈາກບໍລິສັດປະເມີນຊັບສິນ ທີ່ຈົດທະບຽນຖືກຕ້ອງໃນ ສປປ ລາວ;
9. ເອກະສານຢັ້ງຢືນຖານະການເງິນ ແລະ ລາຍງານການເຄື່ອນໄຫວບັນຊີ ຢ່າງໜ້ອຍ ຫົກເດືອນ ຈາກທະນາຄານທຸລະກິດ ຢູ່ ສປປ ລາວ ແລະ ເງິນທຶນໃນບັນຊີດັ່ງກ່າວ ຕ້ອງມີການສືບຕໍ່ເຄື່ອນໄຫວໃນການດຳເນີນທຸລະກິດ;
10. ສັນຍາ ຊື້ ຂາຍ ນ້ຳມັນເຊື້ອໄຟໄລຍະຍາວ ແບບມີເງື່ອນໄຂທາງດ້ານປະລິມານ ກັບຜູ້ສະໜອງຕ່າງປະເທດ;
11. ບັນຊີຊັບສິນຂອງບໍລິສັດ.

**ມາດຕາ 16 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ພາຍຫຼັງໄດ້ຮັບເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ບໍລິສັດທີ່ຮ້ອງຂໍ ພາຍໃນເວລາດັ່ງກ່າວ.

**ມາດຕາ 17 ສາຂາຂອງບໍລິສັດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ**

ສາຂາຂອງບໍລິສັດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ອະນຸຍາດໃຫ້ສ້າງຕັ້ງ ໜຶ່ງສາຂາ ຕໍ່ແຂວງ, ສຳລັບແຂວງໃດ ທີ່ມີສຳນັກງານໃຫຍ່ຕັ້ງຢູ່ແລ້ວ ບໍ່ອະນຸຍາດໃຫ້ສ້າງຕັ້ງສາຂາ. ສາຂາຂອງບໍລິສັດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ຕ້ອງຖືບັນຊີຂຶ້ນກັບບໍລິສັດແມ່ ບົນພື້ນຖານການສະຫຼຸບບັນຊີຂອງແຕ່ລະສາຂາ.

**ມາດຕາ 18 ອາຍຸ ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ມີອາຍຸການນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

ຜູ້ດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ທີ່ມີຈຸດປະສົງຂໍຕໍ່ອາຍຸໃບອະນຸຍາດ ໃຫ້ຍື່ນຄຳຮ້ອງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ ສາມສິບວັນ ກ່ອນວັນໝົດອາຍຸການນຳໃຊ້ ໂດຍປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງຂໍຕໍ່ ຕາມແບບພິມ;

2. ສໍາເນົາໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກນໍ້າມັນເຊື້ອໄຟ;

3. ໃບຢັ້ງຢືນການມອບພັນທະອາກອນ ສອງ ປີຜ່ານມາ;

4. ໃບຢັ້ງຢືນການນໍາໃຊ້ສາງນໍ້າມັນເຊື້ອໄຟ ບ່ອນທີ່ສາງຕັ້ງຢູ່;

5. ເອກະສານຢັ້ງຢືນຖານະການເງິນ;

6. ບົດສະຫຼຸບບັນຊີການເງິນປະຈໍາປີ ນັບແຕ່ປີທີ່ໄດ້ຮັບໃບອະນຸຍາດ ຫຼື ການຕໍ່ໃບອະນຸຍາດ ໂດຍມີການຢັ້ງຢືນຈາກບໍລິສັດກວດສອບບັນຊີ ທີ່ຈົດທະບຽນຖືກຕ້ອງຕາມກົດໝາຍ;

7. ບົດສະຫຼຸບ ການນໍາເຂົ້າ, ການຈໍາໜ່າຍ ແລະ ການແຮຮອງ ນໍ້າມັນເຊື້ອໄຟ ແຕ່ວັນໄດ້ຮັບອະນຸຍາດຈົນຮອດວັນຂໍຕໍ່;

8. ໃບຢັ້ງຢືນການເປັນສະມາຊິກຂອງສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກັດ ລາວ;

9. ບັນຊີຊັບສິນຂອງບໍລິສັດ.

## ໝວດທີ 3
## ການຂໍອະນຸຍາດດໍາເນີນທຸລະກິດຈໍາໜ່າຍນໍ້າມັນເຊື້ອໄຟພາຍໃນ

### ມາດຕາ 19 ທຸລະກິດຈໍາໜ່າຍນໍ້າມັນເຊື້ອໄຟພາຍໃນ

ທຸລະກິດຈໍາໜ່າຍນໍ້າມັນເຊື້ອໄຟພາຍໃນ ແມ່ນການຊື້ນໍ້າມັນເຊື້ອໄຟ ຈາກ ບໍລິສັດນໍາເຂົ້າ-ສົ່ງອອກ ຫຼື ໂຮງງານປຸງແຕ່ງ ນໍ້າມັນເຊື້ອໄຟພາຍໃນ ເພື່ອຈໍາໜ່າຍໃຫ້ແກ່ ປໍ້າທີ່ບໍລິສັດລົງທຶນເອງ, ປໍ້າຕົວແທນ ແລະ ບໍລິສັດ/ໂຄງການ.

### ມາດຕາ 20 ການຂໍອະນຸຍາດດໍາເນີນທຸລະກິດຈໍາໜ່າຍນໍ້າມັນເຊື້ອພາຍໃນ

ຜູ້ທີ່ມີຈຸດປະສົງດໍາເນີນທຸລະກິດຈໍາໜ່າຍນໍ້າມັນເຊື້ອໄຟພາຍໃນ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ໃຫ້ຂໍອະນຸຍາດດໍາເນີນທຸລະກິດນໍາ ກະຊວງອຸດສາຫະກໍາ ແລະ ການຄ້າ.

### ມາດຕາ 21 ເງື່ອນໄຂການຂໍອະນຸຍາດດໍາເນີນທຸລະກິດຈໍາໜ່າຍນໍ້າມັນເຊື້ອໄຟພາຍໃນ

ເງື່ອນໄຂການຂໍອະນຸຍາດດໍາເນີນທຸລະກິດຈໍາໜ່າຍນໍ້າມັນເຊື້ອໄຟພາຍໃນ ມີ ດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ ໃນຮູບແບບບໍລິສັດ;

2. ທຶນຈົດທະບຽນວິສາຫະກິດ ຫ້າສິບຕື້ກີບ ຂຶ້ນໄປ;

3. ສາງນໍ້າມັນເຊື້ອໄຟ ທີ່ສາມາດບັນຈຸນໍ້າມັນເຊື້ອໄຟ ແຕ່ ໜຶ່ງລ້ານ ລິດຂຶ້ນໄປ ຕາມມາດຕະຖານການປຸກສ້າງ ທີ່ໄດ້ຮັບອະນຸຍາດຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ. ສາງນໍ້າມັນເຊື້ອໄຟ ເປັນຂອງຕົນເອງ ຫຼື ເຊົ່າ, ໃນກໍລະນີເຊົ່າ ຕ້ອງມີສັນຍາເຊົ່າຢ່າງໜ້ອຍ ສາມ ປີ;

4. ເຄື່ອງໝາຍການຄ້າ ເປັນຂອງຕົນ;

5. ຕິດຕັ້ງລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈໍາໜ່າຍນໍ້າມັນເຊື້ອໄຟຕາມການກໍານົດຂອງອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ໃນແຕ່ລະໄລຍະ;

6. ສັນຍາ ຊື້ ຂາຍ ນໍ້າມັນເຊື້ອໄຟ ກັບ ບໍລິສັດນໍາເຂົ້າ-ສົ່ງອອກນໍ້າມັນເຊື້ອໄຟ ຫຼື ໂຮງກັ່ນ ຫຼື ໂຮງງານປຸງແຕ່ງ ນໍ້າມັນເຊື້ອໄຟ ພາຍໃນ.

**ມາດຕາ 22 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ມີ ດັ່ງນີ້:

1. ຄຳຮ້ອງຂໍ ຕາມແບບພິມ;
2. ສຳເນົາໃບທະບຽນວິສາຫະກິດ;
3. ເອກະສານຢັ້ງຢືນການຖືບັນຊີ;
4. ເອກະສານຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ຂອງບໍລິສັດ;
5. ໃບຢັ້ງຢືນການນຳໃຊ້ສາງນ້ຳມັນເຊື້ອໄຟ ອອກໃຫ້ໂດຍ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນທີ່ສາງນ້ຳມັນເຊື້ອໄຟ ຕັ້ງຢູ່;
6. ໃບຢັ້ງຢືນການຕິດຕັ້ງ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ;
7. ບົດລາຍງານ ການປະເມີນມູນຄ່າຊັບສິນທຶນຄົງທີ່ ຈາກບໍລິສັດປະເມີນຊັບສິນ ທີ່ຈົດທະບຽນຖືກຕ້ອງໃນ ສປປ ລາວ, ພ້ອມທັງສັນຍາສາງນ້ຳມັນເຊື້ອໄຟ ຖ້າມີ;
8. ເອກະສານຢັ້ງຢືນຖານະການເງິນ ແລະ ລາຍງານການເຄື່ອນໄຫວບັນຊີທະນາຄານ ຢ່າງໜ້ອຍ ຫົກເດືອນ ຈາກທະນາຄານທຸລະກິດ ຢູ່ ສປປ ລາວ;
9. ສັນຍາ ຊື້ ຂາຍ ນ້ຳມັນເຊື້ອໄຟກັບບໍລິສັດນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ຫຼື ໂຮງກັ່ນ ຫຼື ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ພາຍໃນ;
10. ບັນຊີຊັບສິນຂອງບໍລິສັດ.

**ມາດຕາ 23 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ**

ພາຍຫຼັງໄດ້ຮັບເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ບໍລິສັດທີ່ຮ້ອງຂໍ ພາຍໃນເວລາດັ່ງກ່າວ.

**ມາດຕາ 24 ສາຂາຂອງບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ**

ສາຂາຂອງບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ອະນຸຍາດໃຫ້ມີ ໜຶ່ງ ສາຂາ ຕໍ່ແຂວງ, ສຳລັບ ແຂວງທີ່ມີສຳນັກງານໃຫຍ່ຂອງບໍລິສັດດັ່ງກ່າວຕັ້ງຢູ່ນັ້ນ ບໍ່ອະນຸຍາດໃຫ້ມີສາຂາ. ສາຂາຂອງບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ຕ້ອງຖືບັນຊີຂຶ້ນກັບບໍລິສັດແມ່ ບົນພື້ນຖານການສະຫຼຸບບັນຊີຂອງແຕ່ລະສາຂາ.

**ມາດຕາ 25 ອາຍຸ ໃບອະນຸຍາດດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ**

ໃບອະນຸຍາດດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ມີອາຍຸການນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

ຜູ້ດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ທີ່ມີຈຸດປະສົງຂໍຕໍ່ອາຍຸໃບອະນຸຍາດ ໃຫ້ຍື່ນຄຳຮ້ອງຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ ສາມສິບວັນ ກ່ອນວັນໝົດອາຍຸການນຳໃຊ້ ໂດຍໃຫ້ປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຕໍ່ ຕາມແບບພິມ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ;
3. ໃບຢັ້ງຢືນການມອບພັນທະອາກອນ ສອງ ປີຜ່ານມາ;
4. ໃບຢັ້ງຢືນການນຳໃຊ້ສາງນ້ຳມັນເຊື້ອໄຟ ບ່ອນທີ່ສາງຕັ້ງຢູ່;

5. ເອກະສານຢັ້ງຢືນຖານະການເງິນ;

6. ບົດສະຫຼຸບບັນຊີການເງິນປະຈຳປີ ນັບແຕ່ປີທີ່ໄດ້ຮັບອະນຸຍາດ ໂດຍມີການຢັ້ງຢືນຈາກບໍລິສັດກວດສອບບັນຊີ ທີ່ຈົດທະບຽນຖືກຕ້ອງຕາມກົດໝາຍ;

7. ບົດສະຫຼຸບ ການຊື້, ການຈຳໜ່າຍນ້ຳມັນເຊື້ອໄຟ, ຈຳນວນປ້ຳນ້ຳມັນເຊື້ອໄຟ ແລະ ບໍລິສັດ/ໂຄງການ;

8. ໃບຢັ້ງຢືນການເປັນສະມາຊິກຂອງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດລາວ;

9. ບັນຊີຊັບສິນຂອງບໍລິສັດ.

## ໝວດທີ 4
## ການຂໍອະນຸຍາດດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ

**ມາດຕາ 26 ທຸລະກິດປ້ຳນ້ຳມັນເຊື້ອໄຟ**

ທຸລະກິດປ້ຳນ້ຳມັນເຊື້ອໄຟ ແມ່ນ ການຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ແກ່ ຜູ້ຊົມໃຊ້ໂດຍກົງ ຊຶ່ງປະກອບມີ ປ້ຳທີ່ບໍລິສັດລົງທຶນເອງ ແລະ ປ້ຳຕົວແທນ.

**ມາດຕາ 27 ການຂໍອະນຸຍາດດຳເນີນທຸລະກິດ**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ໃຫ້ຂໍອະນຸຍາດດຳເນີນທຸລະກິດນຳ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.

**ມາດຕາ 28 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດ**

ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ ມີ ດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ;

2. ທຶນຈົດທະບຽນ ໜຶ່ງຕື້ກີບ ຂຶ້ນໄປ ສຳລັບປ້ຳທີ່ບໍລິສັດລົງທຶນເອງ ແລະ ສາມຮ້ອຍລ້ານ ກີບ ຂຶ້ນໄປ ສຳລັບປ້ຳຕົວແທນ;

3. ປ້ຳ ຕາມມາດຕະຖານເຕັກນິກການປຸກສ້າງ ທີ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

4. ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ ຕາມການກຳນົດຂອງອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ໃນແຕ່ລະໄລຍະ;

5. ສັນຍາການເປັນປ້ຳນ້ຳມັນເຊື້ອໄຟຕົວແທນ ແລະ ສັນຍາ ຊື້ ຂາຍ ນ້ຳມັນເຊື້ອໄຟ ກັບ ບໍລິສັດນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ຫຼື ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ.

**ມາດຕາ 29 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ ມີ ດັ່ງນີ້:

1. ຄຳຮ້ອງຂໍ ຕາມແບບພິມ;

2. ສຳເນົາໃບທະບຽນວິສາຫະກິດ;

3. ສຳເນົາເອກະສານຢັ້ງຢືນການຖືບັນຊີ;

4. ສຳເນົາສັນຍາ ຊື້ ຂາຍ ນ້ຳມັນເຊື້ອໄຟກັບບໍລິສັດນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ຫຼື ບໍລິສັດຈຳໜ່າຍພາຍໃນ ທີ່ຕົນເປັນຕົວແທນ.

**ມາດຕາ 30 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ພາຍຫຼັງໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງແລ້ວ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບ ເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍ ພາຍໃນເວລາດັ່ງກ່າວ.

**ມາດຕາ 31 ອາຍຸໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດປໍ້ານໍ້າມັນເຊື້ອໄຟ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້.

ຜູ້ດຳເນີນທຸລະກິດປໍ້ານໍ້າມັນເຊື້ອໄຟ ທີ່ມີຈຸດປະສົງຂໍຕໍ່ອາຍຸໃບອະນຸຍາດ ໃຫ້ຍື່ນຄຳຮ້ອງຕໍ່ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຢ່າງໜ້ອຍ ສາມສິບວັນ ກ່ອນວັນໝົດອາຍຸການນຳໃຊ້ ໂດຍໃຫ້ປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍ ຕາມແບບພິມ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດປໍ້ານໍ້າມັນເຊື້ອໄຟ;
3. ສຳເນົາສັນຍາ ຊື້ ຂາຍ ນໍ້າມັນເຊື້ອໄຟກັບບໍລິສັດນຳເຂົ້າ-ສົ່ງອອກ ນໍ້າມັນເຊື້ອໄຟ ຫຼື ບໍລິສັດຈຳໜ່າຍພາຍໃນ ທີ່ຕົນເປັນຕົວແທນ;
4. ສຳເນົາໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ;
5. ບົດສະຫຼຸບບັນຊີການເງິນປະຈຳປີ ນັບແຕ່ປີທີ່ໄດ້ຮັບໃບອະນຸຍາດ ຫຼື ການຕໍ່ໃບອະນຸຍາດ;
6. ບົດສະຫຼຸບ ການຊື້ ແລະ ການຈຳໜ່າຍນໍ້າມັນເຊື້ອໄຟ.

## ໝວດທີ 5
## ການຂໍອະນຸຍາດດຳເນີນທຸລະກິດການໃຫ້ບໍລິການສາງນໍ້າມັນເຊື້ອໄຟ

**ມາດຕາ 32 ທຸລະກິດການໃຫ້ບໍລິການສາງນໍ້າມັນເຊື້ອໄຟ**

ທຸລະກິດການໃຫ້ບໍລິການສາງນໍ້າມັນເຊື້ອໄຟ ແມ່ນ ການໃຫ້ບໍລິການສະຖານທີ່ເກັບຮັກສານໍ້າມັນເຊື້ອໄຟ ເພື່ອໃຫ້ບໍລິສັດນຳເຂົ້າ-ສົ່ງອອກ ນໍ້າມັນເຊື້ອໄຟ ແລະ ບໍລິສັດຈຳໜ່າຍນໍ້າມັນເຊື້ອໄຟພາຍໃນ ມາໃຊ້ບໍລິການ.

**ມາດຕາ 33 ການຂໍອະນຸຍາດດຳເນີນທຸລະກິດ**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດການໃຫ້ບໍລິການສາງນໍ້າມັນເຊື້ອໄຟ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ໃຫ້ຂໍອະນຸຍາດດຳເນີນທຸລະກິດນຳ ກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 34 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດ**

ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດການໃຫ້ບໍລິການສາງນໍ້າມັນເຊື້ອໄຟ ມີ ດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ ໃນຮູບແບບບໍລິສັດ;
2. ທຶນຈົດທະບຽນ ສາມຕື້ກີບ ຂຶ້ນໄປ;
3. ສາງນໍ້າມັນເຊື້ອໄຟທີ່ເປັນຂອງຕົນ ຊຶ່ງສາມາດບັນຈຸນໍ້າມັນເຊື້ອໄຟ ແຕ່ ຫ້າແສນ ລິດຂຶ້ນໄປ;
4. ໄດ້ຮັບອະນຸຍາດ ຕາມມາດຕະຖານເຕັກນິກ ຈາກຂະແໜງການທີ່ກ່ຽວຂ້ອງ;
5. ຕິດຕັ້ງລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນໍ້າມັນເຊື້ອໄຟ.

**ມາດຕາ 35 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາເອກະສານຢັ້ງຢືນການຖືບັນຊີ;
4. ສຳເນົາໃບອະນຸຍາດປຸກສ້າງສາງນ້ຳມັນເຊື້ອໄຟ;
5. ເອກະສານຢັ້ງຢືນ ຫຼື ບົດລາຍງານ ການປະເມີນມູນຄ່າຊັບສິນທຶນຄົງທີ່ ຈາກບໍລິສັດປະເມີນຊັບສິນ ທີ່ຈົດທະບຽນຖືກຕ້ອງໃນ ສປປ ລາວ;
6. ໃບຢັ້ງຢືນຕິດຕັ້ງລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ;
7. ບັນຊີຊັບສິນຂອງບໍລິສັດ.

**ມາດຕາ 36 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ພາຍຫຼັງໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງແລ້ວ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບ ເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍ ພາຍໃນເວລາດັ່ງກ່າວ.

**ມາດຕາ 37 ອາຍຸໃບອະນຸຍາດ**

ໃບອະນຸຍາດດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້.

ຜູ້ດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ ທີ່ມີຈຸດປະສົງຂໍຕໍ່ອາຍຸໃບອະນຸຍາດ ຕ້ອງຍື່ນຄຳຮ້ອງຕໍ່ ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ ສາມສິບວັນ ກ່ອນວັນໝົດອາຍຸນຳໃຊ້ ໂດຍໃຫ້ປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍ ຕາມແບບພິມ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ;
3. ສຳເນົາໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ;
4. ສຳເນົາສັນຍາການໃຫ້ບໍລິການສາງນ້ຳມັນເຊື້ອໄຟ ກັບ ບໍລິສັດນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ຫຼື ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ;
5. ບົດສະຫຼຸບບັນຊີການເງິນປະຈຳປີ ນັບແຕ່ປີທີ່ໄດ້ຮັບອະນຸຍາດ;
6. ບັນຊີຊັບສິນຂອງບໍລິສັດ.

## ໝວດທີ 6
## ການຂໍອະນຸຍາດດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ

**ມາດຕາ 38 ທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ**

ທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ແມ່ນ ການຂົນສົ່ງນ້ຳມັນເຊື້ອໄຟ ໃຫ້ແກ່ ບໍລິສັດນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ແລະ ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ.

### ມາດຕາ 39 ການຂໍອະນຸຍາດດຳເນີນທຸລະກິດ

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ໃຫ້ຂໍອະນຸຍາດດຳເນີນທຸລະກິດນຳ ກະຊວງໂຍທາທິການ ແລະ ຂົນສົ່ງ.

### ມາດຕາ 40 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດ

ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ມີ ດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ ໃນຮູບແບບບໍລິສັດ;
2. ທຶນຈົດທະບຽນ ສາມສິບຕື້ກີບ ຂຶ້ນໄປ;
3. ລະບົບຕິດຕາມລົດຂົນສົ່ງນ້ຳມັນເຊື້ອໄຟ.

### ມາດຕາ 41 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ມີ ດັ່ງນີ້:

1. ຄຳຮ້ອງຕາມແບບພິມ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາເອກະສານຢັ້ງຢືນການຖືບັນຊີ;
4. ສຳເນົາເອກະສານຢັ້ງຢືນຖານະການເງິນ ຈາກທະນາຄານທຸລະກິດ;
5. ບັນຊີຊັບສິນຂອງບໍລິສັດ.

### ມາດຕາ 42 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ

ພາຍຫຼັງໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງແລ້ວ ກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບ ເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍ ພາຍໃນເວລາດັ່ງກ່າວ.

### ມາດຕາ 43 ອາຍຸໃບອະນຸຍາດ

ໃບອະນຸຍາດດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້.

ຜູ້ດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ທີ່ມີຈຸດປະສົງຂໍຕໍ່ອາຍຸໃບອະນຸຍາດ ຕ້ອງຍື່ນຄຳຮ້ອງຕໍ່ ກະຊວງໂຍທາທິການ ແລະ ຂົນສົ່ງ ຢ່າງໜ້ອຍ ສາມສິບວັນ ກ່ອນວັນໝົດອາຍຸນຳໃຊ້ ໂດຍໃຫ້ປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍ ຕາມແບບພິມ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ;
3. ສຳເນົາໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ;
4. ເອກະສານຢັ້ງຢືນການເປັນຜູ້ໃຫ້ການບໍລິການຂົນສົ່ງນ້ຳມັນເຊື້ອໄຟ ໃຫ້ແກ່ ບໍລິສັດນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ຫຼື ບໍລິສັດຈຳໜ່າຍພາຍໃນ ໃດໜຶ່ງ;
5. ສຳເນົາເອກະສານຢັ້ງຢືນຖານະການເງິນ;
6. ບົດສະຫຼຸບບັນຊີການເງິນປະຈຳປີ ນັບແຕ່ປີທີ່ໄດ້ຮັບອະນຸຍາດ;
7. ບັນຊີຊັບສິນຂອງບໍລິສັດ.

## ໝວດທີ 7
## ການໂຈະ ແລະ ການຖອນ ໃບອະນຸຍາດດຳເນີນທຸລະກິດນ້ຳມັນເຊື້ອໄຟ

**ມາດຕາ 44 ການໂຈະການນຳໃຊ້ໃບອະນຸຍາດດຳເນີນທຸລະກິດນ້ຳມັນເຊື້ອໄຟ**

ໃບອະນຸຍາດດຳເນີນທຸລະກິດນ້ຳມັນເຊື້ອໄຟ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີໂຈະ ໂດຍຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟ;
2. ດຳເນີນທຸລະກິດບໍ່ຖືກຕ້ອງຕາມ ເງື່ອນໄຂ, ຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ.

ການແຈ້ງໂຈະໃບອະນຸຍາດດຳເນີນທຸລະກິດນ້ຳມັນເຊື້ອໄຟ ມີກຳນົດເວລາທີ່ແນ່ນອນ.

**ມາດຕາ 45 ການຖອນໃບອະນຸຍາດດຳເນີນທຸລະກິດນ້ຳມັນເຊື້ອໄຟ**

ໃບອະນຸຍາດດຳເນີນທຸລະກິດນ້ຳມັນເຊື້ອໄຟຈະຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີຂໍຢຸດເຊົາການດຳເນີນທຸລະກິດນ້ຳມັນເຊື້ອໄຟ ໂດຍຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟ;
2. ບໍ່ ປັບປຸງ ແລະ ແກ້ໄຂ ຕາມການແຈ້ງໂຈະ;
3. ມີການລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຢ່າງຮ້າຍແຮງ;
4. ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຍຸບເລີກ ຫຼື ໃຫ້ລົ້ມລະລາຍ ຂອງວິສາຫະກິດ.

ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນທຸລະກິດນ້ຳມັນເຊື້ອໄຟແລ້ວ ຂະແໜງການທີ່ຖອນໃບອະນຸຍາດດຳເນີນທຸລະກິດ ຕ້ອງແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

## ພາກທີ III
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟ

## ໝວດທີ 1
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ

**ມາດຕາ 46 ສິດຂອງຜູ້ດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ມີສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດຕໍ່ຊັບສິນໃນການດຳເນີນທຸລະກິດ;
2. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ໃນການດຳເນີນທຸລະກິດ;
3. ນຳເຂົ້າວັດຖຸດິບ ເພື່ອ ຜະລິດ ແລະ ປຸງແຕ່ງ ນ້ຳມັນເຊື້ອໄຟ;
4. ໄດ້ຮັບ ການສົ່ງເສີມ ແລະ ການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ເຕັກໂນໂລຊີ;
5. ຂໍຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດ;
6. ຈຳໜ່າຍນ້ຳມັນເຊື້ອໄຟ ໃຫ້ແກ່ບໍລິສັດນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ຫຼື ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ;
7. ສົ່ງອອກນ້ຳມັນເຊື້ອໄຟ ຕາມທີ່ໄດ້ຮັບອະນຸຍາດ;
8. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
9. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 47 ພັນທະຂອງຜູ້ດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ມີພັນທະ ດັ່ງນີ້:

1. ຖືບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;
2. ດຳເນີນທຸລະກິດຕາມທີ່ໄດ້ຮັບອະນຸຍາດ;
3. ເສຍ ພາສີ, ອາກອນ ແລະ ການເງິນອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
4. ເສຍຄ່າ ບຳລຸງຮັກສາ ແລະ ພັດທະນາ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ;
5. ຜະລິດ ແລະ ປຸງແຕ່ງ ນ້ຳມັນເຊື້ອໄຟ ໃຫ້ໄດ້ຄຸນນະພາບ ໂດຍສອດຄ່ອງກັບມາດຕະຖານແຫ່ງຊາດ;
6. ປະຕິບັດລາຄານ້ຳມັນເຊື້ອໄຟ ຕາມທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດໃນແຕ່ລະໄລຍະ;
7. ໃຫ້ການຮ່ວມມື ກັບອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ຕັ້ງຢູ່ ໃນການຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ການປົກປັກຮັກສາສິ່ງແວດລ້ອມ;
8. ມີຫ້ອງທົດລອງ ເພື່ອທົດສອບຄຸນນະພາບນ້ຳມັນເຊື້ອໄຟທີ່ຕົນໄດ້ ຜະລິດ ແລະ ປຸງແຕ່ງ;
9. ເປັນສະມາຊິກຂອງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ;
10. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ;
11. ສະຫຼຸບ ແລະ ລາຍງານກ່ຽວກັບການດຳເນີນທຸລະກິດຂອງຕົນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ;
12. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 2
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ

**ມາດຕາ 48 ສິດຂອງຜູ້ດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ມີສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດຕໍ່ຊັບສິນໃນການດຳເນີນທຸລະກິດ;
2. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບການນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ;
3. ນຳເຂົ້ານ້ຳມັນເຊື້ອໄຟ ຈາກຜູ້ສະໜອງຕ່າງປະເທດ ຕາມການອະນຸຍາດ;
4. ສົ່ງອອກນ້ຳມັນເຊື້ອໄຟ ຕາມການອະນຸຍາດ;
5. ຊື້ ນ້ຳມັນເຊື້ອໄຟຈາກ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ຢູ່ພາຍໃນ ເພື່ອສົ່ງອອກ;
6. ສະໜອງນ້ຳມັນເຊື້ອໄຟໃຫ້ແກ່ ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ, ປ້ຳຕົວແທນ ແລະ ບໍລິສັດ/ໂຄງການ ຫຼື ປ້ຳທີ່ບໍ່ແມ່ນຕົວແທນຕາມການອະນຸຍາດຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ;
7. ຂົນສົ່ງນ້ຳມັນເຊື້ອໄຟ ຈາກສາງຂອງຕົນ ໄປຫາ ສາງຂອງ ບໍລິສັດຈຳໜ່າຍພາຍໃນ, ປ້ຳທີ່ບໍລິສັດລົງທຶນເອງ, ປ້ຳຕົວແທນ ຫຼື ບໍລິສັດ/ໂຄງການ ຫຼື ວ່າຈ້າງບໍລິສັດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ;
8. ໃຊ້ບໍລິການ ຂອງທຸລະກິດໃຫ້ການບໍລິການ ສາງ ຫຼື ຂົນສົ່ງ ນ້ຳມັນເຊື້ອໄຟ;
9. ໄດ້ຮັບ ການສົ່ງເສີມ ແລະ ການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ເຕັກໂນໂລຊີ;
10. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 ພັນທະ ຂອງຜູ້ດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ມີພັນທະ ດັ່ງນີ້:

1. ດຳເນີນທຸລະກິດຕາມທີ່ໄດ້ຮັບອະນຸຍາດ;
2. ຖືບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;
3. ເສຍ ພາສີ, ອາກອນ, ກອງທຶນນ້ຳມັນເຊື້ອໄຟ ແລະ ການເງິນອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
4. ເສຍຄ່າ ບຳລຸງຮັກສາ ແລະ ພັດທະນາ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກ ຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ;
5. ສ້າງແຜນຈຳໜ່າຍນ້ຳມັນເຊື້ອໄຟປະຈຳປີ ສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນວັນທີ 31 ຕຸລາ ຂອງແຕ່ລະປີ ເພື່ອພິຈາລະນາ;
6. ສະໜອງນ້ຳມັນເຊື້ອໄຟໃຫ້ແກ່ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ, ປ້ຳທີ່ບໍລິສັດລົງທຶນເອງ, ປ້ຳຕົວແທນ ແລະ ບໍລິສັດ/ໂຄງການ ຢ່າງເປັນປົກກະຕິ ຕາມສັນຍາ;
7. ເຮັດສັນຍາ ຊື້ ຂາຍ ນ້ຳມັນເຊື້ອໄຟແບບມີເງື່ອນໄຂທາງດ້ານປະລິມານ ແລະ ຍິນຍອມໃຫ້ເຂົ້າເຖິງຂໍ້ມູນ ກັບ ຜູ້ສະໜອງພາຍໃນ ຫຼື ຕ່າງປະເທດ;
8. ແຈ້ງບໍລິມາດນ້ຳມັນເຊື້ອໄຟຄ້າງສາງທຸກວັນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນເວລາ 12:00 ໂມງ ຂອງວັນຖັດໄປ;
9. ນຳເຂົ້ານ້ຳມັນເຊື້ອໄຟ ຜ່ານດ່ານສາກົນ ແລະ ຄ່ຽນຖ່າຍ ລົງສາງນ້ຳມັນເຊື້ອໄຟຂອງບໍລິສັດຕົນ ກ່ອນການຈຳໜ່າຍ;
10. ນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ໃຫ້ໄດ້ ດັ່ງນີ້:
    - ສອງຮ້ອຍຫ້າສິບລ້ານ ລິດຕໍ່ປີຂຶ້ນໄປ ໃນປີທີໜຶ່ງ;
    - ສາມຮ້ອຍລ້ານ ລິດຕໍ່ປີຂຶ້ນໄປ ໃນປີທີສອງ;
    - ສາມຮ້ອຍຫ້າສິບລ້ານ ລິດຕໍ່ປີຂຶ້ນໄປ ຫຼື ຕາມການກຳນົດຂອງອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ນັບແຕ່ປີທີສາມ ເປັນຕົ້ນໄປ.
11. ສ້າງ ປ້ຳທີ່ບໍລິສັດລົງທຶນເອງ ທີ່ໄດ້ມາດຕະຖານ ຢ່າງໜ້ອຍ ໜຶ່ງ ປ້ຳ ຕໍ່ ແຂວງ, ນະຄອນຫຼວງ;
12. ສ້າງ ເຄືອຂ່າຍຈຳໜ່າຍນ້ຳມັນເຊື້ອໄຟ ຜ່ານປ້ຳຕົວແທນຂອງຕົນ ຫຼື ປ້ຳຕົວແທນຂອງບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ທີ່ຊື້ນ້ຳມັນຈາກຕົນ ຢ່າງໜ້ອຍ ໜຶ່ງ ປ້ຳ ຕໍ່ ເມືອງ, ນະຄອນ;
13. ແຮຮອງນ້ຳມັນເຊື້ອໄຟ ເຈັດລ້ານ ລິດຂຶ້ນໄປ ຫຼື ຕາມການກຳນົດຂອງອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ໃນແຕ່ລະໄລຍະ;
14. ເປັນສະມາຊິກຂອງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ;
15. ນຳເຂົ້າ ແລະ ຈຳໜ່າຍ ນ້ຳມັນເຊື້ອໄຟ ໃຫ້ໄດ້ຄຸນນະພາບ ໂດຍສອດຄ່ອງກັບມາດຕະຖານແຫ່ງຊາດ;
16. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ;
17. ສະຫຼຸບ ແລະ ລາຍງານກ່ຽວກັບການດຳເນີນທຸລະກິດຂອງຕົນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ;
18. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ

**ມາດຕາ 50 ສິດຂອງຜູ້ດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ**

ຜູ້ດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ມີສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດຕໍ່ຊັບສິນໃນການດຳເນີນທຸລະກິດ;
2. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບການຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ;
3. ຊື້ນ້ຳມັນເຊື້ອໄຟຈາກ ບໍລິສັດ ນຳເຂົ້າ-ສົ່ງອອກ ນ້ຳເຊື້ອໄຟ ຫຼື ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟພາຍໃນປະເທດ;
4. ສະໜອງນ້ຳມັນເຊື້ອໄຟໃຫ້ແກ່ປ້ຳນ້ຳມັນເຊື້ອໄຟ ແລະ ບໍລິສັດ/ໂຄງການ ທີ່ເປັນປ້ຳຕົວແທນ ຫຼື ປ້ຳທີ່ບໍ່ແມ່ນຕົວແທນຕາມການອະນຸຍາດຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ;
5. ຂົນສົ່ງນ້ຳມັນເຊື້ອໄຟ ຈາກສາງຂອງຕົນ ໄປຫາ ປ້ຳທີ່ບໍລິສັດລົງທຶນເອງ, ປ້ຳຕົວແທນ ຫຼື ບໍລິສັດ/ໂຄງການ ຫຼື ວ່າຈ້າງບໍລິສັດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ;
6. ນຳໃຊ້ບໍລິການ ຂອງທຸລະກິດໃຫ້ບໍລິການ ສາງ ຫຼື ຂົນສົ່ງ ນ້ຳມັນເຊື້ອໄຟ;
7. ໄດ້ຮັບ ການສົ່ງເສີມ ແລະ ການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ເຕັກໂນໂລຊີ;
8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 51 ພັນທະ ຂອງຜູ້ດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ**

ຜູ້ດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ມີພັນທະ ດັ່ງນີ້:

1. ດຳເນີນທຸລະກິດ ຕາມທີ່ໄດ້ຮັບອະນຸຍາດ;
2. ຖືບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;
3. ເສຍ ພາສີ, ອາກອນ, ກອງທຶນນ້ຳມັນເຊື້ອໄຟ ແລະ ການເງິນອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
4. ເສຍຄ່າ ບຳລຸງຮັກສາ ແລະ ພັດທະນາ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ;
5. ສະໜອງນ້ຳມັນເຊື້ອໄຟໃຫ້ແກ່ປ້ຳນ້ຳມັນເຊື້ອໄຟ ແລະ ບໍລິສັດ/ໂຄງການ ຢ່າງເປັນປົກກະຕິຕາມສັນຍາ;
6. ຮັບປະກັນທາງດ້ານຄຸນນະພາບ ແລະ ປະລິມານນ້ຳມັນເຊື້ອໄຟ ທີ່ຕົນຈຳໜ່າຍ;
7. ສະໜອງຂໍ້ມູນກ່ຽວກັບການຈຳໜ່າຍນ້ຳມັນເຊື້ອໄຟ ແລະ ນ້ຳມັນເຊື້ອໄຟ ຄ້າງສາງ ປະຈຳ ວັນ, ເດືອນ, ງວດ ແລະ ປີ;
8. ຕິດຕັ້ງລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟຂອງຕົນ ໃຫ້ສາມາດເຊື່ອມຕໍ່ກັບລະບົບດັ່ງກ່າວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ;
9. ເປັນສະມາຊິກຂອງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ;
10. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ;
11. ສະຫຼຸບ ແລະ ລາຍງານກ່ຽວກັບການດຳເນີນທຸລະກິດຂອງຕົນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ;
12. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 4
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ

**ມາດຕາ 52 ສິດ ຂອງຜູ້ດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ ມີສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດຕໍ່ຊັບສິນໃນການດຳເນີນທຸລະກິດ;
2. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບທຸລະກິດປ້ຳນ້ຳມັນເຊື້ອໄຟ;
3. ໄດ້ຮັບການສະໜອງນ້ຳມັນເຊື້ອໄຟ ຈາກບໍລິສັດນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ຫຼື ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ຢ່າງເປັນປົກກະຕິ ຕາມສັນຍາ;
4. ໃຫ້ການບໍລິການພາຍໃນປ້ຳນ້ຳມັນເຊື້ອໄຟ ເປັນຕົ້ນ ຮ້ານສະດວກຊື້, ຮ້ານກິນດື່ມ, ລ້າງອັດສີດ, ປ່ຽນຖ່າຍນ້ຳມັນເຄື່ອງ, ສະຖານີສາກລົດໄຟຟ້າ ຕາມການອະນຸຍາດ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 ພັນທະ ຂອງຜູ້ດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ ມີພັນທະ ດັ່ງນີ້:

1. ດຳເນີນທຸລະກິດ ຕາມທີ່ໄດ້ຮັບອະນຸຍາດ;
2. ຖືບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;
3. ເສຍ ອາກອນ ແລະ ການເງິນອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
4. ຊື້ນ້ຳມັນເຊື້ອໄຟ ຈາກບໍລິສັດນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ຫຼື ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ຕາມທີ່ໄດ້ຮັບອະນຸຍາດ;
5. ປະຕິບັດລາຄານ້ຳມັນເຊື້ອໄຟ ຕາມທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດໃນແຕ່ລະໄລຍະ;
6. ຮັບປະກັນທາງດ້ານຄຸນນະພາບ ແລະ ປະລິມານ ນ້ຳມັນເຊື້ອໄຟ ທີ່ຕົນຈຳໜ່າຍ;
7. ແຈ້ງລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ຢູ່ຕູ້ຈ່າຍນ້ຳມັນ ແລະ ໜ້າປ້ຳນ້ຳມັນເຊື້ອໄຟ ບ່ອນທີ່ສາມາດເຫັນໄດ້ງ່າຍ;
8. ແຈ້ງປະລິມານນ້ຳມັນເຊື້ອໄຟ ທີ່ຮັບເຂົ້າ, ຈຳໜ່າຍ ແລະ ຄ້າງຖັງ ຢ່າງເປັນປົກກະຕິ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
9. ແຈ້ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ກ່ອນ ສາມວັນ ໃນກໍລະນີມີການປິດຊົ່ວຄາວ ຫຼື ຖາວອນ ພ້ອມທັງຕິດປ້າຍແຈ້ງໃສ່ໜ້າປ້ຳ ເພື່ອໃຫ້ຜູ້ຊົມໃຊ້ຊາບ;
10. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
11. ສະຫຼຸບ ແລະ ລາຍງານກ່ຽວກັບການດຳເນີນທຸລະກິດຂອງຕົນ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
12. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 5
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ

**ມາດຕາ 54 ສິດ ຂອງຜູ້ດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດການໃຫ້ບໍລິການສາງມັນເຊື້ອໄຟ ມີສິດ ດັ່ງນີ້ :

1. ເປັນເຈົ້າກຳມະສິດຕໍ່ຊັບສິນໃນການດຳເນີນທຸລະກິດ;
2. ໄດ້ຮັບຂໍ້ມູນ ຂ່າວສານກ່ຽວກັບການສາງນ້ຳມັນເຊື້ອໄຟ;
3. ສະໜອງການໃຫ້ບໍລິການສາງນ້ຳມັນເຊື້ອໄຟ ແກ່ ບໍລິສັດນຳເຂົ້າ-ສົ່ງອອກ ແລະ ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ຕາມສັນຍາ;
4. ໄດ້ຮັບ ການສົ່ງເສີມ ແລະ ການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ເຕັກໂນໂລຊີ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 ພັນທະ ຂອງຜູ້ດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ ມີພັນທະ ດັ່ງນີ້:

1. ຖືບັນຊີທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;
2. ດຳເນີນທຸລະກິດ ຕາມທີ່ໄດ້ຮັບອະນຸຍາດ;
3. ລາຍງານຂໍ້ມູນກ່ຽວກັບການໃຫ້ບໍລິການສາງນ້ຳມັນເຊື້ອໄຟ ໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງເປັນປົກກະຕິ;
4. ເສຍ ອາກອນ ແລະ ການເງິນອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
5. ເສຍຄ່າ ບຳລຸງຮັກສາ ແລະ ພັດທະນາ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກຮັບເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ;
6. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
7. ສະຫຼຸບ ແລະ ລາຍງານກ່ຽວກັບການດຳເນີນທຸລະກິດຂອງຕົນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ;
8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 6
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ

**ມາດຕາ 56 ສິດ ຂອງຜູ້ດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ມີສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດຕໍ່ຊັບສິນໃນການດຳເນີນທຸລະກິດ;
2. ໄດ້ຮັບຂໍ້ມູນ ຂ່າວສານກ່ຽວກັບການຂົນສົ່ງນ້ຳມັນເຊື້ອໄຟ;
3. ໃຫ້ການບໍລິການຂົນສົ່ງນ້ຳມັນເຊື້ອໄຟ ແກ່ບໍລິສັດນຳເຂົ້າ-ສົ່ງອອກ ແລະ ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ຢ່າງເປັນປົກກະຕິ ຕາມສັນຍາ;
4. ໄດ້ຮັບ ການສົ່ງເສີມ ແລະ ການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ເຕັກໂນໂລຊີ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57 ພັນທະ ຂອງຜູ້ດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນໍ້າມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນໍ້າມັນເຊື້ອໄຟ ມີພັນທະ ດັ່ງນີ້:

1. ຖືບັນຊີທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;
2. ດຳເນີນທຸລະກິດ ຕາມທີ່ໄດ້ຮັບອະນຸຍາດ;
3. ສະໜອງຂໍ້ມູນກ່ຽວກັບການໃຫ້ບໍລິການຂົນສົ່ງນໍ້າມັນເຊື້ອໄຟ ໃຫ້ຂະແໜງການໂຍທາທິການ ແລະ ຂົນສົ່ງ ຢ່າງເປັນປົກກະຕິ;
4. ລາຍງານກ່ຽວກັບການໃຫ້ບໍລິການຂົນສົ່ງນໍ້າມັນເຊື້ອໄຟ ໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນການໃຫ້ບໍລິການ;
5. ຕິດຕັ້ງລະບົບຕິດຕາມລົດຂົນສົ່ງນໍ້າມັນເຊື້ອໄຟ;
6. ເສຍ ອາກອນ ແລະ ການເງິນອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
7. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
8. ສະຫຼຸບ ແລະ ລາຍງານກ່ຽວກັບການດຳເນີນທຸລະກິດຂອງຕົນ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ;
9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ IV
## ການຄຸ້ມຄອງລາຄານໍ້າມັນເຊື້ອໄຟ

**ມາດຕາ 58 ຫຼັກການກຳນົດໂຄງປະກອບລາຄານໍ້າມັນເຊື້ອໄຟ**

ຫຼັກການກຳນົດໂຄງປະກອບລາຄານໍ້າມັນເຊື້ອໄຟ ມີ ດັ່ງນີ້:

1. ກຳນົດຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງດັດສົມຂອງລັດ;
2. ປະຕິບັດຕາມນະໂຍບາຍຂອງລັດ ກ່ຽວກັບການດັດສົມລາຄານໍ້າມັນເຊື້ອໄຟ ໃນແຕ່ລະໄລຍະ.

ລັດຖະບານ ເປັນຜູ້ກຳນົດໂຄງປະກອບລາຄານໍ້າມັນເຊື້ອໄຟ ຕາມການສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 59 ການກຳນົດລາຄານໍ້າມັນເຊື້ອໄຟ**

ການກຳນົດລາຄານໍ້າມັນເຊື້ອໄຟ ປະຕິບັດ ດັ່ງນີ້:

1. ໂຄງປະກອບລາຄານໍ້າມັນເຊື້ອໄຟທີ່ລັດຖະບານ ກຳນົດໃນແຕ່ລະໄລຍະ;
2. ລາຄານໍ້າມັນເຊື້ອໄຟຕະຫຼາດໂລກ ແລະ ພາກພື້ນ ໃນແຕ່ລະໄລຍະ.

**ມາດຕາ 60 ການກວດນັບບໍລິມາດນໍ້າມັນເຊື້ອໄຟ ກ່ອນການປັບລາຄານໍ້າມັນເຊື້ອໄຟ**

ກ່ອນຈະປັບລາຄານໍ້າມັນເຊື້ອໄຟແຕ່ລະຄັ້ງ ຜູ້ດຳເນີນທຸລະກິດນໍ້າມັນເຊື້ອໄຟ ຕ້ອງແຈ້ງບໍລິມາດນໍ້າມັນເຊື້ອໄຟຄ້າງສາງ ແລະ ປໍ້ານໍ້າມັນເຊື້ອໄຟ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການເງິນ ຕາມການກຳນົດຂອງອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ.

**ມາດຕາ 61 ການແຈ້ງປັບລາຄານໍ້າມັນເຊື້ອໄຟ**

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງການປັບລາຄານໍ້າມັນເຊື້ອໄຟແຕ່ລະຄັ້ງ ໃຫ້ກະຊວງການເງິນ ເພື່ອຈັດເກັບພັນທະດ້ານ ພາສີ, ອາກອນ ແລະ ການເງິນອື່ນ ຕາມໂຄງປະກອບລາຄານໍ້າມັນເຊື້ອໄຟ ແລະ ເຜີຍແຜ່ໃຫ້ສັງຄົມ.

ບໍລິສັດນໍາ ເຂົ້າ-ສົ່ງອອກ ນໍ້າມັນເຊື້ອໄຟ, ບໍລິສັດຈໍາໜ່າຍພາຍໃນ ແລະ ປໍ້ານໍ້າມັນເຊື້ອໄຟ ຕ້ອງປະຕິບັດລາຄານໍ້າມັນເຊື້ອໄຟ ຕາມແຈ້ງການຂອງກະຊວງອຸດສາຫະກໍາ ແລະ ການຄ້າ. ປໍ້ານໍ້າມັນເຊື້ອໄຟ ຕ້ອງຕິດປະກາດແຈ້ງລາຄາຢູ່ຕູ້ຈ່າຍນໍ້າມັນ ແລະ ໜ້າປໍ້າ ໃຫ້ຜູ້ຊົມໃຊ້ຊາບ.

ສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກັດ ລາວ ຕ້ອງຕິດຕາມການປະຕິບັດລາຄານໍ້າມັນເຊື້ອໄຟ ຂອງສະມາຊິກຕົນ ຕາມແຈ້ງການຂອງກະຊວງອຸດສາຫະກໍາ ແລະ ການຄ້າ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 62 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດນໍ້າມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສ້າງອຸປະສັກ, ຂັດຂວາງ, ໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່, ໝິ່ນປະໝາດ ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ປອມແປງເອກະສານ ຫຼື ນໍາໃຊ້ເອກະສານປອມ ກ່ຽວກັບທຸລະກິດນໍ້າມັນເຊື້ອໄຟ;
4. ປິດບັງຂໍ້ມູນຄວາມຈິງ ຫຼື ບໍ່ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
5. ໃຫ້, ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນ;
6. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ.

### ມາດຕາ 63 ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດ ໂຮງງານປຸງແຕ່ງ ນໍ້າມັນເຊື້ອໄຟ

ຫ້າມຜູ້ດໍາເນີນທຸລະກິດໂຮງງານປຸງແຕ່ງ ນໍ້າມັນເຊື້ອໄຟ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດ ໂດຍບໍ່ສອດຄ່ອງກັບຈຸດປະສົງທີ່ໄດ້ຮັບອະນຸຍາດ;
2. ປ່ຽນ ຊື່, ທີ່ຕັ້ງ ຫຼື ຂະຫຍາຍ ໂຮງງານປຸງແຕ່ງ ນໍ້າມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ;
3. ມອບໃບອະນຸຍາດການດໍາເນີນທຸລະກິດ ໂຮງງານປຸງແຕ່ງ ນໍ້າມັນເຊື້ອໄຟ ໃຫ້ຜູ້ອື່ນນໍາໃຊ້;
4. ນໍາເຂົ້າ ວັດຖຸດິບ, ເຄື່ອງຈັກ ຫຼື ອຸປະກອນ ໂດຍບໍ່ໄດ້ຮັບອະນຸຍາດ;
5. ຈໍາໜ່າຍຜະລິດຕະພັນນໍ້າມັນເຊື້ອໄຟ ທີ່ບໍ່ໄດ້ມາດຕະຖານ;
6. ຈໍາໜ່າຍນໍ້າມັນເຊື້ອໄຟ ໂດຍບໍ່ສອດຄ່ອງກັບລາຄານໍ້າມັນເຊື້ອໄຟ ທີ່ລັດກໍານົດ;
7. ຈໍາໜ່າຍຜະລິດຕະພັນນໍ້າມັນເຊື້ອໄຟ ໃຫ້ບໍລິສັດ/ໂຄງການ ຫຼື ປໍ້ານໍ້າມັນເຊື້ອໄຟ;
8. ນໍາເຂົ້າຜະລິດຕະພັນນໍ້າມັນເຊື້ອໄຟ ຫຼື ຊື້ນໍ້າມັນເຊື້ອໄຟທີ່ຜ່ານຂະບວນການ ກັ່ນ ຫຼື ປຸງແຕ່ງ ພາຍໃນປະເທດ;
9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 64 ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດ ນໍາເຂົ້າ-ສົ່ງອອກ ນໍ້າມັນເຊື້ອໄຟ

ຫ້າມຜູ້ດໍາເນີນທຸລະກິດ ນໍາເຂົ້າ-ສົ່ງອອກ ນໍ້າມັນເຊື້ອໄຟ ມີພຶດຕິກໍາ ດັ່ງນີ້:

1. ນໍາເຂົ້າ ແລະ ສະໜອງ ນໍ້າມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ;
2. ກັກຕຸນນໍ້າມັນເຊື້ອໄຟ ເພື່ອເກັງກໍາໄລ ຫຼື ປັ່ນປ່ວນຕະຫຼາດ;
3. ມອບສິດໃຫ້ບໍລິສັດຈໍາໜ່າຍນໍ້າມັນເຊື້ອໄຟພາຍໃນ ຫຼື ບຸກຄົນໃດໜຶ່ງ ນໍາເຂົ້ານໍ້າມັນເຊື້ອໄຟ;
4. ເອົາໃບອະນຸຍາດດໍາເນີນທຸລະກິດ ແລະ ແຜນການຈໍາໜ່າຍນໍ້າມັນເຊື້ອໄຟປະຈໍາປີທີ່ໄດ້ຮັບການອະນຸມັດ ໃຫ້ບຸກຄົນອື່ນນໍາໃຊ້;

5. ນຳເຂົ້າ ແລະ ສະໜອງນ້ຳມັນເຊື້ອໄຟ ໂດຍບໍ່ຄ່ຽນຖ່າຍລິງສາງນ້ຳມັນເຊື້ອໄຟຂອງຕົນ;

6. ນຳເຂົ້ານ້ຳມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ;

7. ນຳເຂົ້ານ້ຳມັນເຊື້ອໄຟ ໂດຍບໍ່ຖືກຕ້ອງ ຕາມປະເພດ, ຊະນິດ ແລະ ບໍລິມາດ ທີ່ໄດ້ຮັບອະນຸຍາດ;

8. ນຳເຂົ້ານ້ຳມັນເຊື້ອໄຟ ໂດຍບໍ່ເສຍພັນທະ ຫຼື ເສຍພັນທະບໍ່ຄົບຖ້ວນ;

9. ຈຳໜ່າຍນ້ຳມັນເຊື້ອໄຟທີ່ຜ່ານຂະບວນການປຸງແຕ່ງພາຍໃນ ໃຫ້ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ;

10. ສະໜອງນ້ຳມັນເຊື້ອໄຟໃຫ້ແກ່ ປ້ຳນ້ຳມັນເຊື້ອໄຟທີ່ບໍ່ແມ່ນປ້ຳຕົວແທນ ແລະ ບໍລິສັດ/ໂຄງການ ໂດຍບໍ່ໄດ້ຮັບອະນຸຍາດ;

11. ຂົນສົ່ງນ້ຳມັນເຊື້ອໄຟ ໃຫ້ປ້ຳທີ່ບໍລິສັດລົງທຶນເອງ ໂດຍບໍ່ອອກໃບສັ່ງຈ່າຍນ້ຳມັນເຊື້ອໄຟ;

12. ຈຳໜ່າຍນ້ຳມັນເຊື້ອໄຟ ໃຫ້ ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ, ປ້ຳນ້ຳມັນເຊື້ອໄຟ ແລະ ບໍລິສັດ/ໂຄງການ ໂດຍບໍ່ມີສັນຍາ;

13. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ມາດຕາ 65 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ

ຫ້າມຜູ້ດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ມີພຶດຕິກຳ ດັ່ງນີ້:

1. ສະໜອງນ້ຳມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ;
2. ກັກຕຸນນ້ຳມັນເຊື້ອໄຟ ເພື່ອເກັງກຳໄລ ຫຼື ປັ່ນປ່ວນຕະຫຼາດ;
3. ເອົາໃບອະນຸຍາດດຳເນີນທຸລະກິດ ໃຫ້ບຸກຄົນອື່ນນຳໃຊ້;
4. ສະໜອງນ້ຳມັນເຊື້ອໄຟ ໂດຍບໍ່ຄ່ຽນຖ່າຍລົງສາງນ້ຳມັນເຊື້ອໄຟຂອງຕົນ;
5. ຈຳໜ່າຍນ້ຳມັນເຊື້ອໄຟ ໂດຍບໍ່ເສຍພັນທະ ອາກອນ ຫຼື ເສຍພັນທະອາກອນ ບໍ່ຄົບຖ້ວນ;
6. ຈຳໜ່າຍນ້ຳມັນເຊື້ອໄຟ ໂດຍບໍ່ເສຍພັນທະ ການເງິນອື່ນ ຫຼື ເສຍພັນທະການເງິນອື່ນ ບໍ່ຄົບຖ້ວນ;
7. ຈຳໜ່າຍນ້ຳມັນເຊື້ອໄຟທີ່ຜ່ານຂະບວນການປຸງແຕ່ງພາຍໃນ ໃຫ້ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ;
8. ສະໜອງນ້ຳມັນເຊື້ອໄຟໃຫ້ແກ່ ປ້ຳນ້ຳມັນເຊື້ອໄຟທີ່ບໍ່ແມ່ນປ້ຳຕົວແທນ ແລະ ບໍລິສັດ/ໂຄງການ ໂດຍບໍ່ໄດ້ຮັບອະນຸຍາດ;
9. ສະໜອງນ້ຳມັນເຊື້ອໄຟ ໃຫ້ ປ້ຳທີ່ບໍລິສັດລົງທຶນເອງ ໂດຍບໍ່ອອກໃບສັ່ງຈ່າຍນ້ຳມັນເຊື້ອໄຟ;
10. ຈຳໜ່າຍນ້ຳມັນເຊື້ອໄຟ ໃຫ້ ປ້ຳນ້ຳມັນເຊື້ອໄຟ ແລະ ບໍລິສັດ/ໂຄງການ ໂດຍບໍ່ມີສັນຍາ;
11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ມາດຕາ 66 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ

ຫ້າມຜູ້ດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ ມີພຶດຕິກຳ ດັ່ງນີ້:

1. ຈຳໜ່າຍນ້ຳມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ແລະ ບໍ່ເຕັມບໍລິມາດ;
2. ກັກຕຸນນ້ຳມັນເຊື້ອໄຟ ເພື່ອເກັງກຳໄລ ຫຼື ປັ່ນປ່ວນຕະຫຼາດ;
3. ເອົາໃບອະນຸຍາດດຳເນີນທຸລະກິດ ໃຫ້ບຸກຄົນອື່ນນຳໃຊ້;
4. ນຳເຂົ້ານ້ຳມັນເຊື້ອໄຟດ້ວຍຕົນເອງ;
5. ຊື້ນ້ຳມັນເຊື້ອໄຟ ຈາກ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ;
6. ຈຳໜ່າຍນ້ຳມັນເຊື້ອໄຟ ໂດຍບໍ່ເສຍພັນທະ ອາກອນ ຫຼື ເສຍພັນທະອາກອນ ບໍ່ຄົບຖ້ວນ;
7. ຈຳໜ່າຍນ້ຳມັນເຊື້ອໄຟ ໂດຍບໍ່ເສຍພັນທະ ການເງິນອື່ນ ຫຼື ເສຍພັນທະການເງິນອື່ນ ບໍ່ຄົບຖ້ວນ;
8. ຈຳໜ່າຍນ້ຳມັນເຊື້ອໄຟ ໂດຍບໍ່ຜ່ານຫົວຈ່າຍນ້ຳມັນເຊື້ອໄຟ;

9. ຈຳໜ່າຍນ້ຳມັນເຊື້ອໄຟ ໂດຍບໍ່ຖືກຕ້ອງຕາມລາຄານ້ຳມັນເຊື້ອໄຟ ທີ່ລັດກຳນົດ;

10. ນຳໃຊ້ລົດຂົນສົ່ງນ້ຳມັນເຊື້ອໄຟຂອງຕົນ ຂົນສົ່ງນ້ຳມັນເຊື້ອໄຟໃຫ້ແກ່ປ້ຳນ້ຳມັນເຊື້ອໄຟອື່ນ;

11. ປິດປ້ຳຊົ່ວຄາວ ຫຼື ປິດຖາວອນ ໂດຍບໍ່ມີເຫດຜົນ ຫຼື ບໍ່ໄດ້ແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 67 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດໃຫ້ບໍລິການສາງນ້ຳມັນເຊື້ອໄຟ**

ຫ້າມຜູ້ດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍບໍ່ສອດຄ່ອງກັບຈຸດປະສົງທີ່ໄດ້ຮັບອະນຸຍາດ;
2. ເອົາໃບອະນຸຍາດດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ ໃຫ້ຜູ້ອື່ນນຳໃຊ້;
3. ບໍ່ເສຍພັນທະ ອາກອນ ຫຼື ເສຍພັນທະອາກອນ ບໍ່ຄົບຖ້ວນ;
4. ບໍ່ເສຍພັນທະ ການເງິນອື່ນ ຫຼື ເສຍພັນທະການເງິນອື່ນ ບໍ່ຄົບຖ້ວນ;
5. ໃຫ້ບໍລິການສາງ ໂດຍບໍ່ ມີສັນຍາ ຫຼື ປ່ຽນແປງສັນຍາການໃຫ້ບໍລິການສາງ ໂດຍບໍ່ແຈ້ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 68 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ**

ຫ້າມຜູ້ດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍບໍ່ສອດຄ່ອງກັບຈຸດປະສົງທີ່ໄດ້ຮັບອະນຸຍາດ;
2. ເອົາໃບອະນຸຍາດດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ໃຫ້ຜູ້ອື່ນນຳໃຊ້;
3. ບໍ່ເສຍພັນທະ ອາກອນ ຫຼື ເສຍພັນທະອາກອນ ບໍ່ຄົບຖ້ວນ;
4. ບໍ່ເສຍພັນທະ ການເງິນອື່ນ ຫຼື ເສຍພັນທະການເງິນອື່ນ ບໍ່ຄົບຖ້ວນ;
5. ໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ໂດຍບໍ່ ມີສັນຍາ ຫຼື ປ່ຽນແປງສັນຍາການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ໂດຍບໍ່ແຈ້ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ;
6. ດັດແປງເຕັກນິກຂອງລົດຂົນສົ່ງນ້ຳມັນເຊື້ອໄຟ ທີ່ບໍ່ຖືກຕ້ອງຕາມມາດຕະຖານ;
7. ຖ່ຽນຖ່າຍນ້ຳມັນເຊື້ອໄຟ ລະຫວ່າງ ລົດ ກັບ ລົດ ຂົນສົ່ງນ້ຳມັນເຊື້ອໄຟ, ຍົກເວັ້ນໃນກໍລະນີສຸກເສີນ;
8. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 69 ຂໍ້ຫ້າມສຳລັບ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດ ສ່ວນຕົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;
2. ກົດໜ່ວງ, ຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ;
3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ;
4. ອອກໃບອະນຸຍາດດຳເນີນທຸລະກິດນ້ຳມັນເຊື້ອໄຟ ໂດຍບໍ່ຖືກຕ້ອງຕາມລະບຽບການ;
5. ຮຽກເອົາ, ທວງເອົາ ຫຼື ຮັບເອົາ ສິນບົນ;
6. ເປັນ ນາຍໜ້າ, ທີ່ປຶກສາ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VI
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 70 ອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ**

ລັດຖະບານ ຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 71 ສິດ ແລະ ໜ້າທີ່ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ຂະແໜງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ;
3. ຄົ້ນຄວ້າ ໂຄງປະກອບລາຄານ້ຳມັນເຊື້ອໄຟ ເພື່ອສະເໜີລັດຖະບານພິຈາລະນາ ໃນແຕ່ລະໄລຍະ;
4. ຄົ້ນຄວ້າປັບລາຄານ້ຳມັນເຊື້ອໄຟ ໃນແຕ່ລະໄລຍະ;
5. ພິຈາລະນາ ສ້າງຕັ້ງ, ອອກ, ໂຈະ ການດຳເນີນທຸລະກິດນ້ຳມັນເຊື້ອໄຟ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດນ້ຳມັນເຊື້ອໄຟ;
6. ຢັ້ງຢືນແຜນການ ຜະລິດ, ຈຳໜ່າຍ ແລະ ອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ;
7. ຢັ້ງຢືນການນຳໃຊ້ສາງນ້ຳມັນເຊື້ອໄຟ, ແຈ້ງເປັນຜູ້ໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ແລະ ບໍລິສັດໃຫ້ບໍລິການປ້ຳ ຕາມການແບ່ງຂັ້ນຄຸ້ມຄອງ;
8. ກວດສອບ ຄຸນນະພາບ ແລະ ບໍລິມາດ ນ້ຳມັນເຊື້ອໄຟ;
9. ພິຈາລະນາ ອອກ ຫຼື ລົບລ້າງ ໃບຢັ້ງຢືນຄຸນນະພາບນ້ຳມັນເຊື້ອໄຟ;
10. ກຳນົດ ມາດຕະຖານ, ບໍລິມາດ, ເຄື່ອງມື, ອຸປະກອນການວັດແທກ, ຖັງຜອງບໍລິມາດ, ອຸປະກອນ ລ໋ອກ ແລະ ລົດຂົນສົ່ງ ນ້ຳມັນເຊື້ອໄຟ;
11. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ;
12. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟ ແລະ ຜູ້ຊົມໃຊ້;
13. ຊີ້ນຳການເຄື່ອນໄຫວຂອງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ ຢ່າງເປັນປົກກະຕິ;
14. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 72 ສິດ ແລະ ໜ້າທີ່ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ຂະແໜງການໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ;

3. ພິຈາລະນາ ສ້າງຕັ້ງ, ອອກ, ໂຈະ ການດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ;

4. ພິຈາລະນາອອກໃບອະນຸຍາດປຸກສ້າງ ສາງ, ປ້ຳ ແລະ ສິ່ງປຸກສ້າງອື່ນ ທີ່ກ່ຽວຂ້ອງກັບທຸລະກິດນ້ຳມັນເຊື້ອໄຟ ບົນພື້ນຖານຄວາມເປັນເອກະພາບກັບຂະແໜງອຸດສາຫະກຳ ແລະ ການຄ້າ;

5. ກຳນົດມາດຕະຖານເຕັກນິກພາຫະນະຂົນສົ່ງ ແລະ ການປຸກສ້າງ ສາງ, ປ້ຳ ນ້ຳມັນເຊື້ອໄຟ;

6. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ແລະ ຜູ້ຊົມໃຊ້;

7. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການຄຸ້ມຄອງທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 73 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານທຸລະກິດນ້ຳມັນເຊື້ອໄຟ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 74 ເນື້ອໃນກວດກາ**

ການກວດກາວຽກງານທຸລະກິດນ້ຳມັນເຊື້ອໄຟ ມີເນື້ອໃນ ດັ່ງນີ້:

1. ປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ;
3. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ການດຳເນີນທຸລະກິດນ້ຳມັນເຊື້ອໄຟ;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 75 ຮູບການ ການກວດກາ**

ການກວດກາວຽກງານທຸລະກິດນ້ຳມັນເຊື້ອໄຟ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍສອງຄັ້ງຕໍ່ປີ;

2. ການກວດກາໂດຍບໍ່ແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບກະທັນຫັນໃນກໍລະນີທີ່ອາດຈະເກີດຜົນເສຍຫາຍອັນຮ້າຍແຮງໂດຍບໍ່ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

# ພາກທີ VII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 76 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ຮັບນະໂຍບາຍ ຕາມກົດໝາຍ.

**ມາດຕາ 77 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດຕາມມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 78 ມາດຕະການ ກ່າວເຕືອນ ແລະ ສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຫ້າມຂອງດຳລັດສະບັບນີ້ ທີ່ເປັນການລະເມີດຄັ້ງທຳອິດທີ່ບໍ່ໄດ້ສ້າງຄວາມເສຍຫາຍ ຢ່າງຫຼວງຫຼາຍ ຊຶ່ງບໍ່ແມ່ນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນ ແລະສຶກສາອົບຮົມ.

**ມາດຕາ 79 ມາດຕະການປັບໃໝ**

ຜູ້ທີ່ລະເມີດດຳລັດສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

**ກ. ທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ:**

1. ຈຳໜ່າຍນ້ຳມັນເຊື້ອໄຟ ໂດຍບໍ່ສອດຄ່ອງກັບລາຄານ້ຳມັນເຊື້ອໄຟ ທີ່ລັດກຳນົດ ຈະຖືກປັບໃໝ 50,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 100,000,000 ກີບ ສຳລັບຄັ້ງທີສອງ;

2. ຈຳໜ່າຍນ້ຳມັນເຊື້ອໄຟ ໃຫ້ບໍລິສັດ/ໂຄງການ ຫຼື ປ້ຳນ້ຳມັນເຊື້ອໄຟ ຈະຖືກປັບໃໝ 50,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 100,000,000 ກີບ ສຳລັບຄັ້ງທີສອງ;

3. ປ່ຽນ ຊື່ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 100,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 200,000,000 ກີບ ສຳລັບຄັ້ງທີສອງ;

4. ເອົາໃບອະນຸຍາດການດຳເນີນທຸລະກິດ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ຫຼື ໃບຢັ້ງຢືນດຳເນີນກິດຈະການໂຮງງານ ໃຫ້ຜູ້ອື່ນນຳໃຊ້ ຈະຖືກປັບໃໝ 300,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 600,000,000 ກີບ ສຳລັບຄັ້ງທີສອງ;

5. ປ່ຽນທີ່ຕັ້ງ ຫຼື ຂະຫຍາຍ ໂຮງງານປຸງແຕ່ງ ນ້ຳມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 500,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 700,000,000 ກີບ ສຳລັບຄັ້ງທີສອງ;

6. ນຳເຂົ້າ ວັດຖຸດິບ, ເຄື່ອງຈັກ ຫຼື ອຸປະກອນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານ້ຳມັນເຊື້ອໄຟທີ່ກວດພົບ ສຳລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ສຳລັບຄັ້ງທີສອງ;

7. ຈຳໜ່າຍນ້ຳມັນເຊື້ອໄຟ ທີ່ບໍ່ໄດ້ມາດຕະຖານ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານ້ຳມັນເຊື້ອໄຟທີ່ກວດພົບ ສຳລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ສຳລັບຄັ້ງທີສອງ;

8. ນໍາເຂົ້ານໍ້າມັນເຊື້ອໄຟ ຫຼື ຊື້ນໍ້າມັນເຊື້ອໄຟທີ່ຜ່ານຂະບວນການ ກັ່ນ ຫຼື ປຸງແຕ່ງ ພາຍໃນປະເທດ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີສອງ.

**ຂ. ທຸລະກິດ ນໍາເຂົ້າ-ສົ່ງອອກ ນໍ້າມັນເຊື້ອໄຟ:**

1. ຂົນສົ່ງນໍ້າມັນເຊື້ອໄຟ ໃຫ້ປໍ້າທີ່ບໍລິສັດລົງທຶນເອງ ໂດຍບໍ່ອອກໃບສັ່ງຈ່າຍນໍ້າມັນເຊື້ອໄຟ ຈະຖືກປັບໃໝ 20,000,000 ກີບ ສາລັບຄັ້ງທີໜຶ່ງ ແລະ 40,000,000 ກີບ ສາລັບຄັ້ງທີສອງ;

2. ຈໍາໜ່າຍນໍ້າມັນເຊື້ອໄຟ ໃຫ້ບໍລິສັດຈໍາໜ່າຍນໍ້າມັນເຊື້ອໄຟພາຍໃນ, ປໍ້ານໍ້າມັນເຊື້ອໄຟ ແລະ ບໍລິສັດ/ໂຄງການ ໂດຍບໍ່ມີສັນຍາ ຈະຖືກປັບໃໝ 50,000,000 ກີບ ສໍາລັບຄັ້ງທີໜຶ່ງ ແລະ 100,000,000 ກີບ ສໍາລັບຄັ້ງທີສອງ;

3. ນໍາເຂົ້ານໍ້າມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 200,000,000 ກີບ ສໍາລັບຄັ້ງທີໜຶ່ງ ແລະ 400,000,000 ກີບ ສາລັບຄັ້ງທີສອງ;

4. ເອົາໃບອະນຸຍາດດໍາເນີນທຸລະກິດ ໃຫ້ບຸກຄົນອື່ນນໍາໃຊ້ ຈະຖືກປັບໃໝ 300,000,000 ກີບ ສໍາລັບຄັ້ງທີໜຶ່ງ ແລະ 600,000,000 ກີບ ສາລັບຄັ້ງທີສອງ;

5. ຈໍາໜ່າຍນໍ້າມັນເຊື້ອໄຟທີ່ຜ່ານຂະບວນການປຸງແຕ່ງພາຍໃນ ໃຫ້ ໂຮງງານປຸງແຕ່ງ ນໍ້າມັນເຊື້ອໄຟ ຈະຖືກປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງມູນຄ່ານໍ້າມັນເຊື້ອໄຟ ທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ຫົກສິບສ່ວນຮ້ອຍ (60%) ຂອງມູນຄ່ານໍ້າມັນເຊື້ອໄຟ ທີ່ກວດພົບ ສໍາລັບຄັ້ງທີສອງ;

6. ນໍາເຂົ້າ ແລະ ສະໜອງ ນໍ້າມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ສາລັບຄັ້ງທີສອງ;

7. ມອບສິດໃຫ້ບໍລິສັດຈໍາໜ່າຍນໍ້າມັນເຊື້ອໄຟພາຍໃນ ຫຼື ບຸກຄົນໃດໜຶ່ງ ນໍາເຂົ້ານໍ້າມັນເຊື້ອໄຟ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີສອງ;

8. ເອົາແຜນການຈໍາໜ່າຍນໍ້າມັນເຊື້ອໄຟປະຈໍາປີທີ່ໄດ້ຮັບການອະນຸມັດ ໃຫ້ບຸກຄົນອື່ນນໍາໃຊ້ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີສອງ;

9. ນໍາເຂົ້າ ແລະ ສະໜອງນໍ້າມັນເຊື້ອໄຟ ໂດຍບໍ່ຄໍ່ານຶງເຖິງຖ່າຍລົງສາງນໍ້າມັນເຊື້ອໄຟຂອງຕົນ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີສອງ;

10. ນໍາເຂົ້ານໍ້າມັນເຊື້ອໄຟ ໂດຍບໍ່ຖືກຕ້ອງ ຕາມປະເພດ, ຊະນິດ ແລະ ປໍລິມາດ ທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີສອງ;

11. ນໍາເຂົ້ານໍ້າມັນເຊື້ອໄຟ ໂດຍບໍ່ເສຍພັນທະ ຫຼື ເສຍພັນທະບໍ່ຄົບຖ້ວນຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າທີ່ກວດພົບ ສໍາລັບຄັ້ງທີສອງ;

12. ສະໜອງນໍ້າມັນເຊື້ອໄຟໃຫ້ແກ່ ປໍ້ານໍ້າມັນເຊື້ອໄຟທີ່ບໍ່ແມ່ນປໍ້າຕົວແທນ ແລະ ບໍລິສັດ/ໂຄງການ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີສອງ.

**ຄ. ທຸລະກິດຈໍາໜ່າຍນໍ້າມັນເຊື້ອໄຟພາຍໃນ**

1. ສະໜອງນໍ້າມັນເຊື້ອໄຟ ໃຫ້ ປໍ້າທີ່ບໍລິສັດລົງທຶນເອງ ໂດຍບໍ່ອອກໃບສັ່ງຈ່າຍນໍ້າມັນເຊື້ອໄຟ ຈະຖືກປັບໃໝ 20,000,000 ກີບ ສໍາລັບຄັ້ງທີໜຶ່ງ ແລະ 40,000,000 ກີບ ສໍາລັບຄັ້ງທີສອງ;

2. ຈໍາໜ່າຍນໍ້າມັນເຊື້ອໄຟ ໃຫ້ ປໍ້ານໍ້າມັນເຊື້ອໄຟ ແລະ ບໍລິສັດ/ໂຄງການ ໂດຍບໍ່ມີສັນຍາ ຈະຖືກປັບໃໝ 45,000,000 ກີບ ສໍາລັບຄັ້ງທີໜຶ່ງ ແລະ 90,000,000 ກີບ ສໍາລັບຄັ້ງທີສອງ;

3. ນໍາເຂົ້ານໍ້າມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 200,000,000 ກີບ ສໍາລັບຄັ້ງທີໜຶ່ງ ແລະ 400,000,000 ກີບ ສໍາລັບຄັ້ງທີສອງ;

4. ເອົາໃບອະນຸຍາດດໍາເນີນທຸລະກິດ ໃຫ້ບຸກຄົນອື່ນນໍາໃຊ້ຈະຖືກປັບໃໝ 200,000,000 ກີບ ສໍາລັບຄັ້ງທີໜຶ່ງ ແລະ 400,000,000 ກີບ ສໍາລັບຄັ້ງທີສອງ;

5. ຈໍາໜ່າຍນໍ້າມັນເຊື້ອໄຟທີ່ຜ່ານຂະບວນການປຸງແຕ່ງພາຍໃນ ໃຫ້ ໂຮງງານປຸງແຕ່ງ ນໍ້າມັນເຊື້ອໄຟ ຈະຖືກປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງມູນຄ່ານໍ້າມັນເຊື້ອໄຟ ທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ຫົກສິບສ່ວນຮ້ອຍ (60%) ຂອງມູນຄ່ານໍ້າມັນເຊື້ອໄຟ ທີ່ກວດພົບ ສໍາລັບຄັ້ງທີສອງ;

6. ສະໜອງນໍ້າມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງນໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີສອງ;

7. ສະໜອງນໍ້າມັນເຊື້ອໄຟ ໂດຍບໍ່ຄ່ຽນຖ່າຍລົງສາງນໍ້າມັນເຊື້ອໄຟຂອງຕົນ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງນໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງນໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີສອງ;

8. ຈໍາໜ່າຍນໍ້າມັນເຊື້ອໄຟ ໂດຍບໍ່ເສຍພັນທະ ການເງິນອື່ນ ຫຼື ເສຍພັນທະການເງິນອື່ນ ບໍ່ຄົບຖ້ວນ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າທີ່ກວດພົບ ສໍາລັບຄັ້ງທີສອງ;

9. ສະໜອງນໍ້າມັນເຊື້ອໄຟໃຫ້ແກ່ ປໍ້ານໍ້າມັນເຊື້ອໄຟທີ່ບໍ່ແມ່ນປໍ້າຕົວແທນ ແລະ ບໍລິສັດ/ໂຄງການ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່ານໍ້າມັນເຊື້ອໄຟທີ່ກວດພົບ ສໍາລັບຄັ້ງທີສອງ.

**ງ. ຜູ້ດໍາເນີນທຸລະກິດປໍ້ານໍ້າມັນເຊື້ອໄຟ**

1. ປິດປໍ້າຊົ່ວຄາວ ຫຼື ປິດຖາວອນ ໂດຍບໍ່ມີເຫດຜົນ ຫຼື ບໍ່ໄດ້ແຈ້ງໃຫ້ຂະແໜງການອຸດສາຫະກໍາ ແລະ ການຄ້າ ຈະຖືກປັບໃໝ 30,000,000 ກີບ ສໍາລັບຄັ້ງທີໜຶ່ງ ແລະ 60,000,000 ກີບ ສໍາລັບຄັ້ງທີສອງ;

2. ຈໍາໜ່າຍນໍ້າມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ແລະ ບໍ່ເຕັມບໍລິມາດ ຈະຖືກປັບໃໝ 45,000,000 ກີບ ສໍາລັບຄັ້ງທີໜຶ່ງແລະ 90,000,000 ກີບ ສໍາລັບຄັ້ງທີສອງ;

3. ຊື້ນໍ້າມັນເຊື້ອໄຟ ຈາກ ໂຮງງານປຸງແຕ່ງ ນໍ້າມັນເຊື້ອໄຟ ຈະຖືກປັບໃໝ 45,000,000 ກີບ ແລະ 90,000,000 ກີບ ສໍາລັບຄັ້ງທີສອງ;

4. ຈໍາໜ່າຍນໍ້າມັນເຊື້ອໄຟ ໂດຍບໍ່ຜ່ານຫົວຈ່າຍນໍ້າມັນເຊື້ອໄຟ ຈະຖືກປັບໃໝ 45,000,000 ກີບ ສໍາລັບຄັ້ງທີໜຶ່ງ ແລະ 90,000,000 ກີບ ສໍາລັບຄັ້ງທີສອງ;

5. ຈໍາໜ່າຍນໍ້າມັນເຊື້ອໄຟ ໂດຍບໍ່ເສຍພັນທະ ການເງິນອື່ນ ຫຼື ເສຍພັນທະການເງິນອື່ນ ບໍ່ຄົບຖ້ວນ ຈະຖືກປັບໃໝ 50,000,000 ກີບ ສໍາລັບຄັ້ງທີໜຶ່ງ ແລະ 100,000,000 ກີບ ສໍາລັບຄັ້ງທີສອງ;

6. ຈຳໜ່າຍນ້ຳມັນເຊື້ອໄຟ ໂດຍບໍ່ຖືກຕ້ອງຕາມລາຄານ້ຳມັນເຊື້ອໄຟ ທີ່ລັດກຳນົດ ຈະຖືກປັບໃໝ 50,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 100,000,000 ກີບ ສຳລັບຄັ້ງທີສອງ;

7. ເອົາໃບອະນຸຍາດດຳເນີນທຸລະກິດ ໃຫ້ບຸກຄົນອື່ນນຳໃຊ້ ຈະຖືກປັບໃໝ ຈະຖືກປັບໃໝ 100,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 200,000,000 ກີບ ສຳລັບຄັ້ງທີສອງ;

8. ນຳໃຊ້ລົດຂົນສົ່ງນ້ຳມັນເຊື້ອໄຟຂອງຕົນ ຂົນສົ່ງນ້ຳມັນເຊື້ອໄຟໃຫ້ແກ່ປ້ຳນ້ຳມັນເຊື້ອໄຟອື່ນ ຈະຖືກປັບໃໝ 100,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 200,000,000 ກີບ ສຳລັບຄັ້ງທີສອງ;

9. ນຳເຂົ້ານ້ຳມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 200,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 400,000,000 ກີບ ສຳລັບຄັ້ງທີສອງ.

**ຈ. ຜູ້ດຳເນີນທຸລະກິດໃຫ້ບໍລິການສາງນ້ຳມັນເຊື້ອໄຟ**

1. ປ່ຽນແປງສັນຍາການໃຫ້ບໍລິການສາງ ໂດຍບໍ່ແຈ້ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຈະຖືກປັບໃໝ 30,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 60,000,000 ກີບ ສຳລັບຄັ້ງທີສອງ;

2. ໃຫ້ບໍລິການສາງ ໂດຍບໍ່ ມີສັນຍາ ຈະຖືກປັບໃໝ 30,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 60,000,000 ກີບ ສຳລັບຄັ້ງທີສອງ;

3. ບໍ່ເສຍພັນທະ ການເງິນອື່ນ ຫຼື ເສຍພັນທະການເງິນອື່ນ ບໍ່ຄົບຖ້ວນ ຈະຖືກປັບໃໝ ຈະຖືກປັບໃໝ 50,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 100,000,000 ກີບ ສຳລັບຄັ້ງທີສອງ;

4. ເອົາໃບອະນຸຍາດດຳເນີນທຸລະກິດການໃຫ້ບໍລິການສາງນ້ຳມັນເຊື້ອໄຟ ໃຫ້ຜູ້ອື່ນນຳໃຊ້ ຈະຖືກປັບໃໝ 100,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 200,000,000 ກີບ ສຳລັບຄັ້ງທີສອງ.

**ສ. ຜູ້ດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ**

1. ໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ໂດຍບໍ່ມີສັນຍາ ຫຼື ປ່ຽນແປງສັນຍາການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ໂດຍບໍ່ແຈ້ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຈະຖືກປັບໃໝ 30,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 60,000,000 ກີບ ສຳລັບຄັ້ງທີສອງ;

2. ເອົາໃບອະນຸຍາດດຳເນີນທຸລະກິດການໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ໃຫ້ຜູ້ອື່ນນຳໃຊ້ ຈະຖືກປັບໃໝ 45,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 90,000,000 ກີບ ສຳລັບຄັ້ງທີສອງ;

3. ດັດແປງເຕັກນິກຂອງລົດຂົນສົ່ງນ້ຳມັນເຊື້ອໄຟ ທີ່ບໍ່ຖືກຕ້ອງຕາມມາດຕະຖານ ຈະຖືກປັບໃໝ 45,000,000 ກີບ ສຳລັບຄັ້ງທີໜຶ່ງ ແລະ 90,000,000 ກີບ ສຳລັບຄັ້ງທີສອງ;

4. ບໍ່ເສຍພັນທະ ການເງິນອື່ນ ຫຼື ເສຍພັນທະການເງິນອື່ນ ບໍ່ຄົບຖ້ວນ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານ້ຳມັນເຊື້ອໄຟທີ່ກວດພົບ ສຳລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່ານ້ຳມັນເຊື້ອໄຟທີ່ກວດພົບ ສຳລັບຄັ້ງທີສອງ;

5. ຖ່າຍຖ່າຍນ້ຳມັນເຊື້ອໄຟ ລະຫວ່າງ ລົດ ກັບ ລົດ ຂົນສົ່ງນ້ຳມັນເຊື້ອໄຟ, ຍົກເວັ້ນໃນກໍລະນີສຸກເສີນ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານ້ຳມັນເຊື້ອໄຟທີ່ກວດພົບ ສຳລັບຄັ້ງທີໜຶ່ງ ແລະ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່ານ້ຳມັນເຊື້ອໄຟທີ່ກວດພົບ ສຳລັບຄັ້ງທີສອງ.

**ມາດຕາ 80 ການຄຸ້ມຄອງເງິນທີ່ໄດ້ຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝຕາມດຳລັດສະບັບນີ້ 60% ມອບເຂົ້າງົບປະມານແຫ່ງລັດ ສ່ວນທີ່ເຫຼືອ 40% ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ໂດຍໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຄຸ້ມຄອງ ເພື່ອນຳໃຊ້ບໍລິຫານວຽກງານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 81 ຂອງດຳລັດສະບັບນີ້.

**ມາດຕາ 81 ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ຈັດຝຶກອົບຮົມ, ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ;

2. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ;

3. ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານການປັບໃໝ ຕໍ່ຜູ້ລະເມີດດຳລັດສະບັບນີ້;

4. ຈັດຊື້ ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ເພື່ອຮັບໃຊ້ວຽກງານຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ;

5. ນຳໃຊ້ເຂົ້າໃນການປະຕິບັດວຽກງານອື່ນ ກ່ຽວກັບການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 82 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບກະຊວງທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ.

**ມາດຕາ 83 ກຳນົດເວລາໃນການແກ້ໄຂ**

ກະຊວງອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບ ຂະແໜງການ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງດຳເນີນການກວດກາຄືນ ແລະ ແຈ້ງ ຢ່າງເປັນລາຍລັກອັກສອນໃຫ້ ບັນດາທຸລະກິດນໍ້າມັນເຊື້ອໄຟ ທີ່ໄດ້ຮັບການສ້າງຕັ້ງ ແລະ ດຳເນີນທຸລະກິດ ກ່ອນດຳລັດສະບັບນີ້ ຕ້ອງປັບປຸງທຸລະກິດຂອງຕົນ ໃຫ້ມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ພາຍໃນເວລາ ສາມປີ ນັບແຕ່ວັນທີ່ໄດ້ຮັບແຈ້ງການຈາກ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຕົ້ນໄປ.

**ມາດຕາ 84 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 29 ຕຸລາ 2025 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍທຸລະກິດນໍ້າມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**